# ຜູ້ແທນປະຊາຊົນ

## PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-16 ພຶດສະພາ 2025

ປີທີ 14

ສະບັບທີ 1017

ລາຍສັປະດາ


## ຮອງປະທານສະພາແຫ່ງຊາດ ເຄື່ອນໄຫວ ວຽກງານຢູ່ໄຊສົມບູນ ແລະ ຊຽງຂວາງ



(ສພຊ) - ໂດຍປະຕິບັດຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ໃນໄລຍະແຕ່ວັນທີ 7-13 ພຶດສະພາ 2025, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດພ້ອມດ້ວຍຄະນະ ທີ່ປະກອບດ້ວຍເລຂາທິການສະພາແຫ່ງຊາດ ແລະ ຮອງປະທານກຳມາທິການປກຊ-ປກສ ຂອງສະພາແຫ່ງຊາດ ໄດ້ເຄື່ອນໄຫວຢ້ຽມຢາມແລະເຮັດວຽກຢູ່ແຂວງໄຊສົມບູນ ແລະ

ອ່ານຕໍ່ໜ້າ 8





ການເພີ່ມທະວີຄວາມສາມັກຄີເປັນເອກະພາບຢູ່ໃນທົ່ວພັກ, ທົ່ວປວງຊົນເປັນຫຼັກການທີ່ສຳຄັນຍິ່ງອັນໜຶ່ງຂອງທຸກໄຊຊະນະຂອງການປະຕິວັດປະເທດເຮົາ.

(ນິພົນເລືອກເຟັ້ນ ເຫຼັ້ມ IV, ໜ້າ 99 ຂອງປະທານ ໄກສອນ ພົມວິຫານ)

ປະເທດເຮົາ ແມ່ນວົງຄະນາຍາດລວມ ອັນປະກອບດ້ວຍຫຼາຍເຜົ່າ, ໃນຫຼາຍເຜົ່າກໍມີຫຼາຍດ້ານທີ່ດີ ປຽບສະເໝືອນດັ່ງດອກໄມ້ນາໆພັນ ຢູ່ໃນສວນອຸທະຍານລວມ ອັນພາໃຫ້ມີຫຼາຍຮູບ, ຫຼາຍສີ ແລະ ກິ່ນຫອມຫວນ.

(ນິພົນເລືອກເຟັ້ນ ເຫຼັ້ມ IV, ໜ້າ 70 ຂອງປະທານ ໄກສອນ ພົມວິຫານ)

ອ່ານຕໍ່ສະບັບໜ້າ

## ຄະນະຜູ້ແທນຂັ້ນສູງ ນວ ຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງເຫງະອານ ແລະ ແຂວງຮ່າຕິ້ງ



(ສພຊ) - ຄະນະຜູ້ແທນຂັ້ນສູງນະຄອນຫຼວງວຽງຈັນ ນຳໂດຍສະຫາຍ ອານຸພາບ ຕຸນາລົມ ຄະນະເລຂາທິການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ໄດ້ເດີນທາງໄປຢ້ຽມຢາມ ແລະ ເຄື່ອນໄຫວວຽກງານຢູ່ແຂວງເຫງະອານ ແລະ ແຂວງຮ່າຕິ້ງ ສສ.ຫວຽດນາມ ໃນລະຫວ່າງວັນທີ 12-16 ພຶດສະພາ 2025.

ວັນທີ 12 ພຶດສະພາ ໄດ້ຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມພົບປະແລະພິທີເຊັນບົດບັນທຶກການຮ່ວມມື ລະຫວ່າງອົງການປົກຄອງນະຄອນຫຼວງວຽງຈັນ ກັບ ຄະນະກຳມະການປະຊາຊົນແຂວງເຫງະອານແລະລະຫວ່າງສະພາປະຊາຊົນນະຄອນຫຼວງວຽງຈັນ ກັບ ສະພາປະຊາຊົນແຂວງເຫງະອານ, ຮ່ວມລົງນາມຝ່າຍລາວໂດຍສະຫາຍສີລິລາດທົງສິນ ທອງເພັງ ຮອງເຈົ້າຄອງ ນວ ແລະ ສະຫາຍ ນາງ

ອ່ານຕໍ່ໜ້າ 9

## ກວດກາເນື້ອໃນກົດໝາຍຢາ ແລະ ຜະລິດຕະພັນການແພດ



(ສພຊ) - ວັນທີ 12-13 ພຶດສະພາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານປະທານແລະຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງສພຊ, ຮອງລັດຖະມົນຕີກະຊວງ ແລະ ອົງການທີ່ກ່ຽວຂ້ອງ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າກົມ, ຄະນະພະແນກ ແລະ ພະນັກງານ-ລັດຖະກອນ

ອ່ານຕໍ່ໜ້າ 7

## ລະດົມຄຳຄິດເຫັນດ້ານເນື້ອໃນ ໃສ່ປຶ້ມ 50 ປີ ສາຍພົວພັນ ສພຊ ລາວ-ຫວຽດນາມ





(ສພຊ) - ກອງປະຊຸມລະດົມຄຳຄິດເຫັນດ້ານເນື້ອໃນໃສ່ປຶ້ມ "50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດແຫ່ງ ສປປລາວແລະສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ, ການຮ່ວມມືຮອບດ້ານແລະພັດທະນາ" ໄດ້ຈັດຂຶ້ນໃນວັນທີ 15-16 ພຶດສະພານີ້ ທີ່ເມືອງວັງວຽງ

ອ່ານຕໍ່ໜ້າ 8

## ປະກອບຄຳເຫັນໃສ່ຮ່າງກົດໝາຍຄວາມປອດໄພໄຊເບີ



(ສພຊ) - ເພື່ອເປັນການຄົ້ນຄວ້າ, ວິເຄາະວິໄຈ ເນື້ອໃນຕ່າງໆຂອງກົດໝາຍຢ່າງລະອຽດ, ເລິກເຊິ່ງ ຮັບປະກັນຄວາມພ້ອມທາງດ້ານເນື້ອໃນຂອງຮ່າງກົດໝາຍວ່າດ້ວຍຄວາມປອດໄພໄຊເບີ ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX; ວັນທີ 9 ພຶດສະພານີ້ ທີ່ເມືອງວັງວຽງ ແຂວງວຽງຈັນ, ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍຄວາມປອດໄພໄຊເບີ (ສ້າງໃໝ່) ໂດຍການເປັນປະທານຂອງທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາ

ອ່ານຕໍ່ໜ້າ 8

## ປະທານ ກສຕສ ເຄື່ອນໄຫວວຽກງານຢູ່ ແຂວງວຽງຈັນ ແລະ ແຂວງຫຼວງພະບາງ



ອ່ານຕໍ່ໜ້າ 7


ໝີກິນເຜັ້ງ (ໜ້າ 9)



ຜັກຕຳນິນ... (ໜ້າ 10)



ໂປໂລຍ ສະຫຼົມສະຫຼອງ... (ໜ້າ 11)

ເຂົ້າໃຈ ໄດ້ຍິດຮຽນ

❖ ວິເສດ ສະແຫວງສຶກສາ

ປະວັດຕະກ່າສຸດອື່ອ... (ໜ້າ 12)

# ປະກອບຄຳເຫັນໃສ່ຮ່າງກົດໝາຍສາມັນສຶກສາ



(ສພຊ) - ວັນພຸດທີ 14 ພຶດສະພາຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍສາມັນສຶກສາ (ສະບັບສ້າງໃໝ່) ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານປະທານ ແລະຮອງປະທານກຳມາທິການຂອງ ສພຊ, ຮອງລັດຖະມົນຕີກະຊວງ ແລະ ອົງການທີ່ກ່ຽວຂ້ອງ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າກົມ, ຄະນະພະແນກ ແລະ ພະນັກງານ-ລັດຖະກອນຈາກພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ຄຳໃບ ດຳລັດ ກ່າວວ່າ: ຮ່າງກົດໝາຍວ່າດ້ວຍສາມັນສຶກສາສະບັບສ້າງໃໝ່ນີ້ ກ່ອນທີ່ລັດຖະບານຈະສະເໜີຫາຄະນະປະຈຳສະພາແຫ່ງຊາດ, ກະຊວງສຶກສາທິການ ແລະ ກິລາ ກໍໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງດຳເນີນການຄົ້ນຄວ້າຕາມຂັ້ນຕອນຂອງການສ້າງນິຕິກຳ ແລະ ໄດ້ຈັດກອງປະຊຸມຂັ້ນວິຊາການແລ້ວ; ສະນັ້ນ, ການຈັດກອງປະຊຸມໃນຄັ້ງນີ້ ຈຶ່ງມີຄວາມໝາຍຄວາມສຳຄັນຫຼາຍ ເພາະຈະເປັນການຄົ້ນຄວ້າ, ຮຽບຮຽງຢ່າງລະອຽດຮອບດ້ານ ແນໃສ່ເຮັດໃຫ້ຮ່າງກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີIX ທີ່ຈະໄຂຂຶ້ນໃນເດືອນມິຖຸນານີ້.

ທ່ານ ປອ. ສໍາລານ ພັນຄະວົງ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ໄດ້ສະເໜີເຫດຜົນແລະຄວາມຈຳເປັນຂອງການສ້າງກົດໝາຍວ່າດ້ວຍສາມັນສຶກສາ ແມ່ນເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍແລະນິຕິກຳໃຕ້ກົດໝາຍ, ແຜນຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ຫຼຸດຜ່ອນອັດຕາການປະລະຂອງຜູ້ຮຽນ ແລະເພີ່ມຄວາມຮັບຜິດຊອບຂອງພໍ່ແມ່ຫຼືຜູ້ປົກຄອງ, ຊຸມຊົນ ແລະ ສັງຄົມ; ຊຸກຍູ້ ແລະ ສົ່ງເສີມການລົງທຶນເຂົ້າໃສ່ວຽກງານສາມັນສຶກສາໃຫ້ຫຼາຍຂຶ້ນ; ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຂອງພັກປະຊາຊົນປະຕິວັດລາວ ຄັ້ງທີ IX, X ແລະXI ໃນການຈັດຕັ້ງປະຕິບັດ 4ເນື້ອໃນບຸກທະລຸໂດຍສະເພາະການບຸກທະລຸດ້ານການພັດທະນາຊັບພະຍາກອນມະນຸດ; ເຮັດໃຫ້ການຄຸ້ມຄອງ, ບໍລິຫານວຽກງານສາມັນສຶກສາ ມີຄວາມເປັນເອກະພາບ, ມີປະສິດທິພາບ ແລະປະສິດທິຜົນ ທັງຮັບປະກັນຄຸນນະພາບການສຶກສາ ສອດຄ່ອງກັບສະພາບການປ່ຽນແປງໃນໄລຍະໃໝ່. ທ່ານໃຫ້ຮູ້ອີກວ່າ: ເມື່ອກົດໝາຍສະບັບນີ້ໄດ້ຖືກຮັບຮອງ ແລະ ປະກາດໃຊ້ ຈະເປັນບ່ອນອີງໃຫ້ຂະແໜງການສຶກສາທິການ ແລະ ກິລາ ໃນການສ້າງນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການແລະບັນດານິຕິກຳຕ່າງໆ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານສາມັນສຶກສາ ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ; ຮັບປະກັນໃຫ້ພົນລະເມືອງລາວເຂົ້າເຖິງການສຶກສາສາມັນສຶກສາທີ່ມີຄຸນນະພາບທຽບເທົ່າກັບພາກພື້ນ ແລະ ສາກົນ; ຍົກສູງຄວາມເຊື່ອໝັ້ນໃຫ້ແກ່ຊຸມຊົນ, ສັງຄົມ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເຫັນໄດ້ເຖິງຄວາມສຳຄັນຂອງວຽກງານສາມັນສຶກສາທັງຊຸກຍູ້ ແລະ ສົ່ງເສີມການລົງທຶນໃສ່ວຽກງານສາມັນສຶກສາໃຫ້ຫຼາຍຂຶ້ນ; ເພີ່ມທະວີຄວາມຮັບຜິດຊອບ, ຍົກສູງຄວາມຮູ້ຄວາມເຂົ້າໃຈ ແລະ ເປັນເຈົ້າການໃນການປະຕິບັດສິດ, ໜ້າທີ່ ແລະພັນທະຂອງພົນລະເມືອງລາວທຸກຄົນເພື່ອປະກອບສ່ວນດ້ານທຶນຮອນ, ແຮງງານ ແລະ ວັດຖຸປະກອນ ເຂົ້າໃນວຽກງານສາມັນສຶກສາຢ່າງຕັ້ງໜ້າ.

**(ສອນສັກ ວັນວິໄຊ)**

# ກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍປ້າຍ




(ສພຊ) - ວັນທີ 8 ພຶດສະພານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍປ້າຍ (ສະບັບປັບປຸງ) ໂດຍການເປັນປະທານຂອງທ່ານ ພຶທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານປະທານ ແລະຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງ ສພຊ, ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ), ຮອງລັດຖະມົນຕີກະຊວງຍຸຕິທຳ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທ່ານ ພຶທ. ສຸວອນ ເລືອງບຸນມີ ໄດ້ມີຄຳເຫັນກ່າວເປີດວ່າ: ກອງປະຊຸມຄັ້ງນີ້ແມ່ນການຄົ້ນຄວ້າເນື້ອໃນຮອບດ້ານຂອງຮ່າງກົດໝາຍຢ່າງລະອຽດ ໂດຍເລີ່ມແຕ່ມາດຕາທຳອິດຫາມາດຕາສຸດທ້າຍ ເພື່ອເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍສະບັບນີ້ ມີຄວາມຄົບຖ້ວນ, ຊັດເຈນ, ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນປັດຈຸບັນ ແລະ ການຈັດຕັ້ງປະຕິບັດວຽກງານປ້າຍຕົວຈິງ ແນໃສ່ເຮັດໃຫ້ຮ່າງກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມແລະສອດຄ່ອງກັບລັດຖະທຳມະນູນ, ກົດໝາຍອື່ນທີ່ປະກາດໃຊ້ແລ້ວເພື່ອສາມາດນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ IX.

ທ່ານວັນສີກົວມົວຮອງລັດຖະມົນຕີກະຊວງ ຖວທ ໄດ້ສະເໜີໂດຍຫຍໍ້ກ່ຽວກັບເຫດຜົນ ແລະ ຄວາມຈຳເປັນ ຂອງການປັບປຸງກົດໝາຍວ່າດ້ວຍປ້າຍ ແມ່ນເພື່ອປະຕິບັດໜ້າທີ່ປົກປັກຮັກສາ ແລະ ພັດທະນາປະເທດຊາດ ຕາມແຜນພັດທະນາເສດຖະກິດ-ສັງຄົມ, ວັດທະນະທຳແຕ່ລະໄລຍະ ໃຫ້ສອດຄ່ອງແລະບັນລຸຄາດໝາຍທີ່ວາງໄວ້, ສາມາດຮັກສາໄດ້ລັກສະນະຊາດ, ກ້າວໜ້າ ແລະ ມະຫາຊົນ, ສາມາດເຊື່ອມໂຍງກັບພາກພື້ນ ແລະສາກົນ; ສ້າງຄວາມເປັນເອກະພາບ, ສະເໝີພາບ ແລະ ຄວາມຍຸຕິທຳ ໃນການແຂ່ງຂັນດຳເນີນທຸລະກິດກ່ຽວກັບປ້າຍແລະການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ້າຍ; ແກ້ໄຂການແບ່ງຂັ້ນຄຸ້ມຄອງ ແລະ ເກັບລາຍຮັບວິຊາການຖອກເຂົ້າງົບປະມານໃຫ້ບັນລຸຕາມຄາດໝາຍ; ສ້າງຄວາມສອດຄ່ອງຕໍ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ກັບບັນດາຂະແໜງການຕ່າງໆ (ສາທາລະນະສຸກ, ໂຍທາທິການ ແລະຂົນສົ່ງ, ອຸດສາຫະກຳ ແລະການຄ້າ, ການລົງທຶນ); ແກ້ໄຂການຜະລິດແລະການຫ້າມນຳເຂົ້າປ້າຍຈາກຕ່າງປະເທດ ທີ່ຂຽນຕົວໜັງສືບໍ່ຖືກຕາມຫຼັກໄວຍາກອນລາວ, ສີສັນຂອງປ້າຍບໍ່ສອດຄ່ອງກັບເອກະລັກວັດທະນະທຳຂອງ ສປປລາວ; ກຳນົດຮູບແບບຂອງປ້າຍໃຫ້ຄົບຖ້ວນ ເຮັດໃຫ້ການຄຸ້ມຄອງງ່າຍຂຶ້ນ; ກຳນົດຮູບແບບການຂໍອະນຸຍາດນຳໃຊ້ປ້າຍ, ການດຳເນີນທຸລະກິດປ້າຍ, ເວລານຳໃຊ້ປ້າຍໃຫ້ຄົບຖ້ວນ. ທ່ານໃຫ້ຮູ້ອີກວ່າ: ຫາກກົດໝາຍວ່າດ້ວຍປ້າຍຖືກຮັບຮອງ ແລະ ປະກາດໃຊ້ ຈະເປັນເຄື່ອງມືໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງປ້າຍໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີກວ່າເກົ່າ; ເນື້ອໃນກົດໝາຍມີຄວາມສົມບູນ, ລະອຽດຈະແຈ້ງຂຶ້ນ, ເຂົ້າໃຈງ່າຍໃນທາງປະຕິບັດການກວດກາການເກັບລາຍຮັບ, ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການທັນກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນປັດຈຸບັນ ແລະອະນາຄົດ; ເຮັດໃຫ້ປະຊາຊົນລາວບັນດາເຜົ່າ ແລະ ສາກົນເຫັນໄດ້ເຖິງນະໂຍບາຍຢ່າງຈະແຈ້ງຂອງພັກ ແລະ ລັດຖະບານໃນການຄຸ້ມຄອງ ແລະ ສົ່ງເສີມວຽກງານປ້າຍ; ຍົກສູງສະຕິຊາດ, ຄວາມເປັນເອກະລາດ, ເອກະພາບແລະເປັນເຈົ້າຕົນເອງຂອງປະຊາຊົນບັນດາເຜົ່າໃຫ້ສູງຂຶ້ນ; ສາມາດແກ້ໄຂບັນຫາຄົງຄ້າງການໂຄສະນາດ້ວຍປ້າຍ ເປັນຕົ້ນແມ່ນສ້າງຄວາມເປັນເອກະພາບ, ສະເໝີພາບ ແລະຄວາມຍຸຕິທຳ ໃນການແຂ່ງຂັນດຳເນີນທຸລະກິດກ່ຽວກັບປ້າຍ; ສ້າງ ແລະ ປັບປຸງກົດໝາຍ ໃຫ້ສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍກັບບັນດາຂະແໜງການອື່ນ; ສ້າງຄວາມອາດສາມາດສ້າງລາຍຮັບເຂົ້າງົບປະມານ ແລະການນຳໃຊ້ໂປ່ງໃສ, ກວດສອບໄດ້; ແກ້ໄຂການຜະລິດ ແລະ ນຳເຂົ້າປ້າຍຈາກຕ່າງປະເທດ; ສ້າງຄວາມເປັນລະບຽບຮຽບຮ້ອຍໃນການຕິດຕັ້ງປ້າຍໃນຕົວເມືອງ ໃຫ້ມີຄວາມສວຍງາມ.

ບັນດາຜູ້ເຂົ້າຮ່ວມໄດ້ເປັນເຈົ້າການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຕໍ່ບັນດາເນື້ອໃນຮ່າງກົດໝາຍສະບັບນີ້ຢ່າງມີຈຸດສຸມ, ມີລັກສະນະຫຼັກການຕິດພັນກັບການຈັດຕັ້ງປະຕິບັດຕົວຈິງ ແລະ ມີຄຳເຫັນລົງເລິກແຕ່ລະພາກ, ໝວດ, ມາດຕາໃນນັ້ນ, ມີຫຼາຍເນື້ອໃນຂອງຫຼາຍມາດຕາ ໄດ້ຮັບການປັບປຸງໃຫ້ມີຄວາມຄົບຖ້ວນ, ຮັດກຸມ ແລະ ຊັດເຈນກວ່າເກົ່າ.

**(ນາງ ອາລິນ ສຸພົມມະປະດິດ)**

# ເຝິກອົບຮົມການປະເມີນຜົນການປະຕິບັດຂໍ້ຕົກລົງ
## ປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ



(ສພຂ) - ວັນທີ 7-8 ພຶດສະພານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອັດຕະປື, ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມເຝິກອົບຮົມການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ໂດຍການເປັນປະທານຂອງທ່ານ ອຳໄພ ຈິດມານົບ ຮອງປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີວິທະຍາກອນ, ຄະນະກົມ, ຄະນະພະແນກ ແລະສຳມະນາກອນຈາກ ສພຂ 3 ແຂວງຄື: ອັດຕະປື, ສາລະວັນ ແລະເຊກອງ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງອ້ອມຂ້າງແຂວງອັດຕະປື; ຈຸດປະສົງຕົ້ນຕໍແມ່ນເພື່ອຍົກລະດັບຄວາມຮູ້ກ່ຽວກັບວຽກງານຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ ໃຫ້ແກ່ສະພາປະຊາຊົນຂັ້ນແຂວງ ເພື່ອສາມາດປະຕິບັດພາລະບົດບາດ, ສິດແລະໜ້າທີ່ ທີ່ຕິດພັນກັບວຽກງານດັ່ງກ່າວ ຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ເປັນເອກະພາບ ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງ.

ໃນການເຝິກອົບຮົມໄດ້ຮັບຟັງການນຳສະເໜີບົດຮຽນການສ້າງ ແລະປັບປຸງນິຕິກຳໃຕ້ກົດໝາຍ (ຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ); ເຜີຍແຜ່ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ແລະ ຄູ່ມືກ່ຽວກັບການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງປະທານຄະນະກຳມະການປົກຄອງນະຄອນຫຼວງ, ແຂວງ; ບົດຮຽນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂອງກຳມາທິການກົດໝາຍສະພາແຫ່ງຊາດ; ບົດຮຽນການຕິດຕາມກວດກາຂອງຄະນະປະຈຳສະພາປະຊາຊົນແຂວງຄຳມ່ວນ ທີ່ຕິດພັນກັບການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ພາຍໃນແຂວງຄຳມ່ວນ; ບົດຮຽນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດຂໍ້ຕົກລົງຂອງເຈົ້າແຂວງຄຳມ່ວນ; ເຜີຍແຜ່ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການສ້າງ ແລະ ປັບປຸງກົດໝາຍ ໄລຍະປີ 2026-2030 ສະບັບເລກທີ 03/ຄປຈ, ລົງວັນທີ 5 ມັງກອນ 2024 ແລະ ຄຳແນະນຳຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ ສະບັບເລກທີ 01/ຄປຈ, ລົງວັນທີ 3 ມັງກອນ 2024 ເຊິ່ງລ້ວນແລ້ວແຕ່ເປັນເນື້ອໃນທີ່ມີຄວາມໝາຍ ແລະ ຄວາມສຳຄັນຫຼາຍ ຕິດພັນກັບການຈັດຕັ້ງປະຕິບັດວຽກງານກໍຄືການປະຕິບັດພາລະບົດບາດຂອງສະພາປະຊາຊົນຂັ້ນແຂວງ.

ການເຝິກອົບຮົມຄັ້ງນີ້ ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກມູນນິທິເວສຕ໌ມິນສ໌ເຕີ ເພື່ອປະຊາທິປະໄຕ (Westminster Foun-dation for Democracy - WFD).

**(ວິນັດ ສີສຸລາດ)**

# ປະທານ ກປຊສ ສຳເລັດການ ຢ້ຽມຢາມ ແລະ ເຮັດວຽກຢູ່ກຳປູເຈຍ



(ສພຊ) - ຄະນະຜູ້ແທນສະພາແຫ່ງຊາດລາວ ນຳໂດຍທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ກປຊສ) ສຳເລັດການຢ້ຽມຢາມ ແລະ ເຮັດວຽກຢູ່ລາຊະອານາຈັກກຳປູເຈຍ ໃນລະຫວ່າງວັນທີ 6-11 ພຶດສະພາ 2025; ຈຸດປະສົງຂອງການໄປຢ້ຽມຢາມຄັ້ງນີ້ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບທີ່ເປັນມູນເຊື້ອ, ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ລະຫວ່າງສອງອົງການນິຕິບັນຍັດ ກໍຄືສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດກຳປູເຈຍ ເວົ້າລວມ,ເວົ້າສະເພາະແມ່ນລະຫວ່າງສອງກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ສະພາແຫ່ງຊາດລາວ ແລະ ກຳມາທິການພາຍໃນ, ປ້ອງກັນຊາດ, ບໍລິການພົນລະເຮືອນ ແລະ ວຽກງານຊາຍແດນ ສະພາແຫ່ງຊາດກຳປູເຈຍ ທັງເປັນການຜັນຂະຫຍາຍບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ-ກຳປູເຈຍສະບັບປີ2022ໃນການແລກປ່ຽນຂໍ້ມູນຂ່າວສານ, ບົດຮຽນການຈັດຕັ້ງປະຕິບັດພາລະບົດບາດ ແລະໜ້າທີ່ຂອງສະພາແຫ່ງຊາດ ກໍຄືກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການຮ່ວມມືຂອງຄະນະມິດຕະພາບລັດຖະສະພາລາວ-ກຳປູເຈຍ, ກຳປູເຈຍ-ລາວ.

ວັນທີ6 ພຶດສະພາ, ທ່ານ ພົຕ. ປອ. ວົງສັກ ພັນທະວົງ ພ້ອມດ້ວຍຄະນະ ໄດ້ພົບປະເຮັດວຽກສອງຝ່າຍກັບທ່ານ ແກັບ ຈຸຕິມາ ປະທານກຳມາທິການ (ທີ 4) ກຳມາທິການພາຍໃນ, ປ້ອງກັນຊາດ, ບໍລິການພົນລະເຮືອນແລະວຽກງານຊາຍແດນ ພ້ອມດ້ວຍຄະນະ ດ້ວຍບັນຍາກາດໄມຕີຈິດມິດຕະພາບອັນອົບອຸ່ນ,ສະໜິດສະໜົມຖານສະຫາຍອ້າຍນ້ອງບ້ານໃກ້ເຮືອນຄຽງທີ່ດີ; ທ່ານ ພົຕ. ປອ. ວົງສັກ ພັນທະວົງ ໃນນາມເປັນປະທານຄະນະມິດຕະພາບລັດຖະສະພາລາວ-ກຳປູເຈຍ ພ້ອມດ້ວຍຄະນະ ໄດ້ພົບປະເຮັດວຽກກັບທ່ານ ສັນຕິ ບັນດິດ ລອຍ ໂສພາດ ປະທານກຳມາທິການແຜນການ, ການລົງທຶນ, ກະສິກຳ, ພັດທະນາຊົນນະບົດ, ສິ່ງແວດລ້ອມ ແລະ ຊັບພະຍາກອນທາງນ້ຳ ທັງເປັນປະທານຄະນະມິດຕະພາບລັດຖະສະພາ ກຳປູເຈຍ-ລາວ ພ້ອມດ້ວຍຄະນະ ເຊິ່ງເຕັມໄປດ້ວຍບັນຍາກາດອັນຮັກແພງ ແລະ ຄວາມສາມັກຄີ. ໃນວັນດຽວກັນ,ທ່ານປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂ່ຳນັບສົມເດັດ ມະຫາ ຣັດສະເພຍທິກາ ທິພະໄດ ຄຸນ ສຸດາຣີ ປະທານສະພາແຫ່ງຊາດກຳປູເຈຍ ເຊິ່ງສອງຝ່າຍໄດ້ແຈ້ງສະພາບການພົ້ນເດັ່ນຂອງແຕ່ລະປະເທດໃຫ້ກັນຊາບ, ຕີລາຄາສູງສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່,ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານ ລະຫວ່າງພັກປະຊາຊົນປະຕິວັດລາວ ກັບ ພັກປະຊາຊົນກຳປູເຈຍ ກໍຄືສອງລັດ ແລະ ປະຊາຊົນສອງຊາດ ເວົ້າລວມ, ເວົ້າສະເພາະການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດລາວ-ກຳປູເຈຍ ໃຫ້ນັບມື້ແຕກດອກອອກຜົນຍິ່ງຂຶ້ນ. ພ້ອມນີ້, ທ່ານປະທານສະພາແຫ່ງຊາດກຳປູເຈຍ ຍັງໄດ້ໃຫ້ທິດຊີ້ນຳໃນການພົວພັນຮ່ວມມືໃນຕໍ່ໜ້າລະຫວ່າງອົງການນິຕິບັນຍັດຂອງສອງປະເທດ ເປັນຕົ້ນແມ່ນປະຕິບັດຕາມບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືຂອງສອງສະພາແຫ່ງຊາດ ທີ່ໄດ້ຮ່ວມກັນລົງນາມ; ເພີ່ມທະວີການຮ່ວມມືໃຫ້ເລິກເຊິ່ງກວ່າເກົ່າ, ຮ່ວມກັນຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດຂໍ້ຕົກລົງຕ່າງໆ ທີ່ສອງປະເທດໄດ້ລົງນາມຮ່ວມກັນ ໂດຍສະເພາະຊຸກຍູ້ການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍການກຳນົດຊາຍແດນປະເທດ ລະຫວ່າງລັດຖະບານ ກຳປູເຈຍ-ລາວ; ພ້ອມກັນສະກັດກັ້ນບັນຫາອາຊະຍາກຳຂ້າມຊາດ, ຢາເສບຕິດ ແລະ ການຄ້າຂາຍເຖື່ອນເພື່ອໃຫ້ມີຄວາມເປັນລະບຽບຮຽບຮ້ອຍຕາມຊາຍແດນ; ຮ່ວມກັນກໍ່ສ້າງພື້ນຖານໂຄງລ່າງ ແລະ ພັດທະນາລຽບຕາມບໍລິເວນຊາຍແດນຂອງສອງປະເທດ ໃຫ້ກາຍເປັນເສັ້ນຊາຍແດນສັນຕິພາບ, ມິດຕະພາບ ແລະ ການພັດທະນາ ເພື່ອຄວາມເປັນຢູ່ທີ່ດີຂອງປະຊາຊົນລຽບຕາມຊາຍແດນ ກໍຄືການພັດທະນາຂອງສອງປະເທດ.

ວັນທີ9-11 ພຶດສະພາ, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ເດີນທາງໄປຢ້ຽມຢາມແຂວງສີຫານຸວິນ ໂດຍໄດ້ພົບປະເຮັດວຽກກັບຄະນະພັກຄະນະນຳຂອງແຂວງ ເຊິ່ງໄດ້ຮັບຟັງລາຍງານການພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະບົດຮຽນກ່ຽວກັບການຂົນສົ່ງທາງທະເລ, ທາງບົກ ແລະ ທາງອາກາດ ອັນເປັນທ່າແຮງການພັດທະນາຂອງແຂວງ; ຄະນະຜູ້ແທນຍັງໄດ້ຢ້ຽມທ່າເຮືອກຳປັ່ນ, ເຂດພັດທະນາເສດຖະກິດພິເສດຂອງແຂວງ ທີ່ສຳປະທານໂດຍນັກລົງທຶນຕ່າງປະເທດ ແລະ ທ່ຽວຊົມສະຖານທີ່ທ່ອງທ່ຽວທາງປະຫວັດສາດ, ວັດທະນະທຳ ຈຳນວນໜຶ່ງຂອງແຂວງອີກດ້ວຍ.



# ພິທີມອບ-ຮັບເຄື່ອງໃຫ້ທະຫານແຂວງບໍ່ແກ້ວ



(ສພຊ) - ວັນທີ 12 ພຶດສະພາຜ່ານມາ, ສະພາແຫ່ງຊາດ ພ້ອມດ້ວຍຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ໄດ້ຈັດພິທີມອບ-ຮັບເຄື່ອງອຸປະໂພກ-ບໍລິໂພກ ໃຫ້ແກ່ກອງບັນຊາການທະຫານແຂວງບໍ່ແກ້ວ ລວມມູນຄ່າທັງໝົດ 135 ລ້ານກີບ, ຕາງໜ້າມອບໂດຍທ່ານ ດຣ. ນາງ ວິພາວັນ ພົມວິຫານ ປະທານກອງທຶນຊ່ວຍເຫຼືອສັງຄົມ ແລະຕາງໜ້າຮັບໂດຍທ່ານ ພົຈວ. ຂາວມະນີ ສີພອນ ຮອງຫົວໜ້າຫ້ອງວ່າການກະຊວງປ້ອງກັນປະເທດ ເຊິ່ງມີທ່ານ ປອ. ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດແລະພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມເປັນສັກຂີພະຍານ.

ການມອບເຄື່ອງອຸປະໂພກ-ບໍລິໂພກໃນຄັ້ງນີ້, ເພື່ອຊຸກຍູ້ປະກອບສ່ວນກຳລັງແຮງສັງລວມໃຫ້ແກ່ພະນັກງານ-ນັກຮົບ ທີ່ກຳລັງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ເຂດທຸລະກັນດານຫ່າງໄກສອກຫຼີກ ດ້ວຍຄວາມຫ້າວຫານ ເຊິ່ງບັນດາສະຫາຍໄດ້ສຸມເຫື່ອແຮງ ສະຕິປັນຍາ, ກຳລັງແຮງກາຍໃຈ ເຮັດໜ້າທີ່ປົກປັກຮັກສາອະທິປະໄຕເຂດນ້ຳແດນດິນດ້ວຍຄວາມອົງອາດກ້າຫານ.

**(ນາງ ກຸກກິກ ບຸດດາໄຊ)**

# ຄລສ ຕິດຕາມ ແລະ ເກັບກຳຂໍ້ມູນ ການເຄື່ອນໄຫວວຽກງານຢູ່ ສພຂ ຫຼວງນ້ຳທາ



(ສພຂ) - ວັນທີ 6 ພຶດສະພານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ຫຼວງນ້ຳທາ ໄດ້ດຳເນີນກອງປະຊຸມຕິດຕາມຊຸກຍູ້ ແລະ ເກັບກຳຂໍ້ມູນການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາແຫ່ງຊາດ (ຄລສ) ພາຍໃຕ້ການເປັນປະທານຂອງທ່ານ ສິງຄຳ ວົງພະຈັນ ຮອງເລຂາທິການສະພາແຫ່ງຊາດ ໂດຍມີບັນດາທ່ານຄະນະກົມ, ຄະນະພະແນກ ແລະ ພະນັກງານຂອງ ຄລສ ພ້ອມດ້ວຍບັນດາທ່ານຮອງເລຂາທິການ, ຫົວໜ້າ ແລະ ຮອງຫົວໜ້າຂະແໜງ,ພະນັກງານພາຍໃນສພຂ ເຂົ້າຮ່ວມ.

ໃນວາລະດຳເນີນກອງປະຊຸມ, ໄດ້ຮັບຟັງລາຍງານການເຄື່ອນໄຫວວຽກງານໂດຍຫຍໍ້ຂອງຄະນະເລຂາທິການສະພາປະຊາຊົນແຂວງໃນໄລຍະຜ່ານມາ ເປັນຕົ້ນບັນຫາພົ້ນເດັ່ນ,ຜົນສຳເລັດ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງ 3 ຂະແໜງຂຶ້ນກັບຄື: ຂະແໜງຄົ້ນຄວ້າສັງລວມ ແລະ ຂໍ້ມູນຂ່າວສານ, ຂະແໜງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ,ຂະແໜງບໍລິຫານ, ຈັດຕັ້ງ ແລະ ກວດກາ; ພ້ອມດຽວກັນ, ກໍໄດ້ແລກປ່ຽນປະກອບຄຳຄິດເຫັນຕໍ່ການຈັດຕັ້ງປະຕິບັດວຽກງານໃນຂົງເຂດຄະນະເລຂາທິການ ລະຫວ່າງສະພາແຫ່ງຊາດ ກັບ ສະພາປະຊາຊົນແຂວງ ຢ່າງມີຈຸດສຸມ ແລະ ມີການສະເໜີບັນຫາທີ່ຍັງບໍ່ສອດຄ່ອງ, ທັງນີ້ ເພື່ອຕີລາຄາຄືນບັນດາໜ້າວຽກເພື່ອກ້າວໄປເຖິງການປັບປຸງແກ້ໄຂໃນຕໍ່ໜ້າໃຫ້ມີຄຸນນະພາບ, ສອດຄ່ອງກັບສະພາບຕົວຈິງ.

ໂອກາດນີ້, ທ່ານ ສິງຄຳ ວົງພະຈັນ ໄດ້ມີຄຳເຫັນຕໍ່ການຈັດຕັ້ງປະຕິບັດວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ກັບວຽກງານຄະນະເລຂາທິການ ທີ່ເຫັນວ່າມີຜົນສຳເລັດຫຼາຍດ້ານ ພ້ອມທັງຮຽກຮ້ອງໃຫ້ເອົາໃຈໃສ່ຈັດຕັ້ງປະຕິບັດວຽກງານໃນການເປັນເສນາທິການໃນທຸກໆດ້ານໃຫ້ການນຳພາຍໃນສະພາປະຊາຊົນແຂວງ ໃຫ້ດີຂຶ້ນກວ່າເກົ່າ ແລະ ຈະນຳເອົາຄຳສະເໜີໄປຫາຂັ້ນເທິງຄົ້ນຄວ້າແກ້ໄຂໃຫ້ມີຄວາມຖືກຕ້ອງ, ສອດຄ່ອງຂຶ້ນເທື່ອລະກ້າວ.

# ຜູ້ແທນສະພາແຫ່ງຊາດ ເຂົ້າຮ່ວມ ສຳມະນາກ່ຽວກັບນະໂຍບາຍດິນຟ້າອາກາດ



(ສພຊ) - ວັນທີ 7-8 ພຶດສະພານີ້, ຄະນະຜູ້ແທນສະພາແຫ່ງຊາດ ນຳໂດຍທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາການຮ່ວມມືລະຫວ່າງສະພາພາກພື້ນອາຊີຕາເວັນອອກສຽງໃຕ້ ກ່ຽວກັບ "ນະໂຍບາຍດິນຟ້າອາກາດ" ທີ່ນະຄອນຫຼວງບາງກອກ, ລາຊະອານາຈັກໄທ; ກອງປະຊຸມຄັ້ງນີ້ ຈັດຂຶ້ນໂດຍການເປັນເຈົ້າພາບຮ່ວມກັນລະຫວ່າງລັດຖະສະພາໄທ, ສູນຄົ້ນຄວ້າລັດຖະສະພາອາຊີ (PCAsia), ສະມັດຊາລັດຖະສະພາບັນດາປະເທດທີ່ໃຊ້ພາສາຝຣັ່ງ (APF) ແລະ ອົງການຝຣັ່ງໂກໂຟນີສາກົນ (OIF) ແລະ ດຳເນີນໄປພາຍໃຕ້ຫົວຂໍ້ຕົ້ນຕໍ "ນະໂຍບາຍດິນຟ້າອາກາດ" ເຊິ່ງມີຄະນະຜູ້ແທນຈາກພາກພື້ນອາຊີຕາເວັນອອກສຽງໃຕ້ຄື: ລາຊະອານາຈັກໄທ, ສປປລາວ ແລະ ລາຊະອານາຈັກກຳປູເຈຍ ພ້ອມດ້ວຍຕົວແທນຈາກ PCAsia, APF ແລະ OIF ລວມທັງໝົດຈຳນວນ 55 ທ່ານ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງ ແລະ ປຶກສາຫາລືກັນ ກ່ຽວກັບບັນດານະໂຍບາຍການສ້າງນິຕິກຳແລະກົດໝາຍວ່າດ້ວຍການປ່ຽນແປງຂອງດິນຟ້າອາກາດ, ໂດຍໄດ້ມີການແລກປ່ຽນບົດຮຽນກັບບັນດາສະມາຊິກລັດຖະສະພາທີ່ມີກົດໝາຍດັ່ງກ່າວແລະເຝິກຫັດຮ່ວມກັນຮ່າງກົດໝາຍວ່າດ້ວຍດິນຟ້າອາກາດແຫ່ງຊາດໃນອະນາຄົດ ທີ່ຄຳນຶງເຖິງລັກສະນະສະເພາະຂອງພາກພື້ນ ແລະ ທ້ອງຖິ່ນຂອງແຕ່ລະປະເທດ ໂດຍສະເພາະແມ່ນກ່ຽວກັບການຄຸ້ມຄອງ "ອາກາດສະອາດ" ແລະ ເສີມສ້າງຄວາມສາມາດໃນການຮັບມືກັບສະພາບອາກາດທີ່ມີການປ່ຽນແປງ; ພ້ອມດຽວກັນນີ້, ໃນກອງປະຊຸມໂຕະມົນກໍຍັງໄດ້ມີການແລກປ່ຽນປະສົບການແລະປະກອບຄຳຄິດຄຳເຫັນຮ່ວມກັນ ທີ່ສະທ້ອນໃຫ້ເຫັນເຖິງບົດຮຽນ ແລະ ການຈັດຕັ້ງປະຕິບັດຂອງລັດຖະສະພາທີ່ໄດ້ປະຕິບັດໃນໄລຍະຜ່ານມາ, ສິ່ງທີ່ປະຕິບັດໄດ້ ແລະ ສິ່ງໃດທີ່ຈຳເປັນຈະຕ້ອງສ້າງເປັນນິຕິກຳ, ຕິດຕາມກວດກາ ແລະຍົກສູງຄວາມຮັບຮູ້ກ່ຽວກັບຜົນກະທົບທີ່ເປັນອັນຕະລາຍຈາກການປ່ຽນແປງຂອງດິນຟ້າອາກາດ ແນໃສ່ການປະຕິບັດດ້ານດິນຟ້າອາກາດໃນປະເທດຂອງຕົນ ແລະ ພາກພື້ນ ໃຫ້ມີຄວາມເຂັ້ມແຂງເພີ່ມຂຶ້ນ ພ້ອມທັງຮັບຟັງ, ແລກປ່ຽນຄຳຄິດຄຳເຫັນ ແລະປະສົບການ ກ່ຽວກັບບັນຫາການປ່ຽນແປງຂອງດິນຟ້າອາກາດ ຮ່ວມກັບບັນດາລັດຖະສະພາປະເທດສະມາຊິກ APF ອີກດ້ວຍ.

ໃນການເຂົ້າຮ່ວມກອງປະຊຸມຄັ້ງນີ້, ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ນຳສະເໜີບົດພາຍໃຕ້ 3 ຫົວຂໍ້ຍ່ອຍສຳຄັນ: "ປະສົບການທີ່ລັດຖະສະພາໄດ້ດຳເນີນການໄປແລ້ວ ສິ່ງທີ່ໄດ້ຜົນດີ ແລະ ສິ່ງຈຳເປັນໃນດ້ານນິຕິກຳ, ການຕິດຕາມແລະປູກຈິດສຳນຶກຜົນກະທົບອັນຕະລາຍຈາກການປ່ຽນແປງດິນຟ້າອາກາດ"; "ສົ່ງເສີມການແລກປ່ຽນປະສົບການ ແລະ ການປະຕິບັດທີ່ດີໃນກົດໝາຍດິນຟ້າອາກາດ, ການແບ່ງປັນຂໍ້ມູນ, ສັງລວມໂຄງຮ່າງການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານດິນຟ້າອາກາດທີ່ມີການປ່ຽນແປງ" ແລະ "ຜົນກະທົບ ແລະ ສິ່ງທ້າທາຍຂອງການປະຕິບັດລັດຖະສະພາ: ນິຕິກຳກ່ຽວກັບດິນຟ້າອາກາດ ແລະການກວດກາລັດຖະສະພາ" ເຊິ່ງຄະນະຜູ້ແທນຂອງສະພາແຫ່ງຊາດລາວໄດ້ນຳສະເໜີບົດ, ແລກປ່ຽນຄຳຄິດຄຳເຫັນໃນຈຸດໜ່ວຍຄົ້ນຄວ້າຢ່າງຕັ້ງໜ້າແລະກົງໄປກົງມາ ໂດຍໄດ້ເນັ້ນໜັກເຖິງບົດບາດຄວາມສຳຄັນຂອງສະພາແຫ່ງຊາດ ແລະ ການປະຕິບັດການຕິດຕາມກວດກາວຽກງານຂອງລັດຖະບານຢ່າງໃກ້ຊິດ ເພື່ອເຮັດໃຫ້ການສ້າງນະໂຍບາຍດິນຟ້າອາກາດ, ການອອກກົດໝາຍ ແລະ ນິຕິກຳຕ່າງໆ ໃນການຄຸ້ມຄອງ ແລະສາມາດເອື້ອອຳນວຍໃນການຮັບມື ແລະ ການປະຕິບັດວຽກງານຕົວຈິງ ໃນວຽກງານດິນຟ້າອາກາດ ໃຫ້ໄດ້ຮັບປະສິດທິຜົນຫຼາຍຂຶ້ນ ພ້ອມທັງສາມາດຫຼຸດຜ່ອນຜົນກະທົບຕໍ່ການດຳລົງຊີວິດການເປັນຢູ່ຂອງປະຊາຊົນອີກດ້ວຍ.

# ກສຕສ ເຄື່ອນໄຫວວຽກງານຢູ່ຄຳມ່ວນ ແລະ ສະຫວັນນະເຂດ



(ສພຊ) - ວັນທີ 5-9 ພຶດສະພາຜ່ານມາ, ທ່ານຄຳມ່ວນ ຊົມສີຫາປັນຍາ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດບາງວຽກງານໃນຂົງເຂດເສດຖະກິດ ເປັນຕົ້ນ: ການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບການອຳນວຍຄວາມສະດວກທາງດ້ານການຂົນສົ່ງ ໂດຍສະເພາະການຂົນສົ່ງສິນຄ້າພາຍໃນ, ລະຫວ່າງປະເທດ ແລະຜ່ານແດນ; ການຈັດຕັ້ງປະຕິບັດວຽກງານສົ່ງເສີມການຜະລິດເພື່ອຄ້ຳປະກັນສະບຽງອາຫານ ແລະ ເປັນສິນຄ້າສົ່ງອອກ ເພື່ອຫຼຸດຜ່ອນການນຳເຂົ້າ ທັງເປັນການກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂອງບັນດາສູນ, ສະຖານີ ຜະລິດແນວພັນພືດ, ແນວພັນສັດ ແລະ ປັດໄຈການຜະລິດອື່ນໆ; ການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນອອກໃບຕາດິນ ແລະ ການປະຕິບັດພັນທະຄ່າເຊົ່າ, ສຳປະທານທີ່ດິນຂອງບັນດາໂຄງການລົງທຶນ; ຕິດຕາມ, ກວດກາ ແລະ ຊຸກຍູ້ບັນດາໂຄງການລົງທຶນຈຳນວນໜຶ່ງທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມແລະທຳມະຊາດຢູ່ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ ໂດຍການຕ້ອນຮັບຂອງທ່ານປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ ແລະ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນສະພາປະຊາຊົນແຂວງສະຫວັນນະເຂດ ພ້ອມດ້ວຍຄະນະ. ໃນໂອກາດດັ່ງກ່າວ, ທ່ານຄຳມ່ວນ ຊົມສີຫາປັນຍາ ພ້ອມດ້ວຍຄະນະ ກໍໄດ້ເຂົ້າຢ້ຽມຂໍ່ານັບທ່ານເຈົ້າແຂວງໆສະຫວັນນະເຂດ ເພື່ອລາຍງານຈຸດປະສົງໃນການເຄື່ອນໄຫວເຮັດວຽກຢູ່ແຂວງໃນຄັ້ງນີ້ອີກດ້ວຍ.

ໃນການເຄື່ອນໄຫວຄັ້ງນີ້, ຄະນະໄດ້ລົງຢ້ຽມຢາມການຈັດຕັ້ງປະຕິບັດວຽກງານຂອງບໍລິສັດເອັກຄິແອວແມັກໂປຕາສຄຳມ່ວນ ຈຳກັດ ແລະ ບໍລິສັດ ຝຸ່ນໂປຕາສອາຊີ-ໂປຕາສ (ລາວ) ຈຳກັດຜູ້ດຽວ ຢູ່ແຂວງຄຳມ່ວນ. ຈາກນັ້ນ, ກໍໄດ້ສືບຕໍ່ເຄື່ອນໄຫວຢູ່ແຂວງສະຫວັນນະເຂດ ເຊິ່ງໄດ້ລົງເຮັດວຽກຢູ່ໂຮງງານຜະລິດມັນຕົ້ນລາວ TTL ພັດທະນາຄັບວົງຈອນ ຈຳກັດ, ດ່ານສາກົນແດນສະຫວັນ-ລາວບາວ, ຢ້ຽມຢາມການຈັດຕັ້ງປະຕິບັດໂຄງການພະລັງງານລົມ ສະຫວັນ 1 ແລະ ຕິດຕາມການຈັດຕັ້ງປະຕິບັດໂຄງການຊົນລະປະທານຫ້ວຍອາໄກ້ ແລະ ໄດ້ເຮັດວຽກຮ່ວມກັບບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ ຄື: ແຜນການ ແລະ ການລົງທຶນ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະລັງງານ ແລະ ບໍ່ແຮ່, ກະສິກຳ ແລະປ່າໄມ້, ອຸດສາຫະກຳ ແລະ ການຄ້າ, ການເງິນ, ໂຍທາທິການ ແລະ ຂົນສົ່ງ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ເພື່ອຮັບຟັງການລາຍງານກ່ຽວກັບຂໍ້ສະດວກແລະຂໍ້ຫຍຸ້ງຍາກໃນການການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ຕິດພັນກັບການອຳນວຍຄວາມສະດວກທາງດ້ານການຂົນສົ່ງ ໂດຍສະເພາະການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019 ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ເຄື່ອນຍ້າຍສິນຄ້າຢູ່ ສປປ ລາວ, ກົດໝາຍວ່າດ້ວຍທີ່ດິນ ແລະ ນິຕິກຳໃຕ້ກົດໝາຍທີ່ພົວພັນກັບວຽກງານທີ່ດິນລວມທັງການຈັດຕັ້ງຜັນຂະຫຍາຍມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 57/ຄປຈ, ລົງວັນທີ 31 ພຶດສະພາ 2024 ວ່າດ້ວຍການພິຈາລະນາຮັບຮອງເອົາການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້ ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 20/ລບ, ລົງວັນທີ 05 ພະຈິກ 2024 ໂດຍສະເພາະວຽກງານການຂຶ້ນທະບຽນອອກໃບຕາດິນ, ການຈັດຕັ້ງປະຕິບັດວຽກງານຂອງບັນດາໂຄງການລົງທຶນຈຳນວນໜຶ່ງ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ; ການຈັດຕັ້ງປະຕິບັດບັນດາປັດໄຈການຜະລິດທີ່ສຳຄັນ ທີ່ເປັນການປະກອບສ່ວນຊຸກຍູ້ວຽກງານສົ່ງເສີມການຜະລິດເພື່ອຄ້ຳປະກັນສະບຽງອາຫານແລະເປັນສິນຄ້າສົ່ງອອກ ຫຼຸດຜ່ອນການນຳເຂົ້າ ເປັນຕົ້ນການກຳນົດນະໂຍບາຍ, ຊຸກຍູ້ສົ່ງເສີມໃຫ້ຜູ້ຜະລິດພາຍໃນເຂົ້າເຖິງສິນເຊື່ອແລະກອງທຶນຕ່າງໆ ໃນອັດຕາດອກເບ້ຍທີ່ເໝາະສົມ ລວມທັງການເຂົ້າເຖິງຕະຫຼາດ, ຮັບປະກັນປະລິມານ ແລະ ຄຸນນະພາບຂອງສິນຄ້າ. ພ້ອມກັນນັ້ນ, ກໍຍັງໄດ້ຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການລົງທຶນປີ 2025 ໃນການກໍ່ສ້າງ ແລະ ສ້ອມແປງເສັ້ນທາງ, ການຟື້ນຟູສ້ອມແປງຂົວ ແລະ ທາງ, ບັນດາເສັ້ນທາງທີ່ເປ່ເພເສຍຫາຍຈາກການຂົນສົ່ງໜັກ ໃນຂອບເຂດຂອງແຂວງ. ຫຼັງຈາກນັ້ນ, ກໍໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ ແລະ ດ້ານຂໍ້ຄົງຄ້າງທີ່ຕ້ອງໄດ້ຊອກຫາວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີຄວາມຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ, ນິຕິກຳໃຕ້ກົດໝາຍທີ່ໄດ້ກຳນົດໄວ້. ພ້ອມດຽວກັນນັ້ນ, ທ່ານ ຄຳມ່ວນ ຊົມສີຫາປັນຍາ ຍັງໄດ້ມີຄຳເຫັນຊີ້ນຳໃຫ້ແຕ່ລະພະແນກການ ເພີ່ມທະວີ ແລະ ເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ມີປະສິດທິພາບ ແລະ ປະສິດທິຜົນຂຶ້ນກວ່າເກົ່າ.

# ສນສ ເຄື່ອນໄຫວເກັບກຳຂໍ້ມູນຢູ່ ສພຂ ໄຊສົມບູນ



(ສພຂ) - ວັນທີ 6 ພຶດສະພາຜ່ານມາ, ທ່ານ ຄຳແທ່ນ ວິລະກຸນ ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳສະພາແຫ່ງຊາດ (ສນສ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ສະພາປະຊາຊົນແຂວງ(ສພຂ) ໄຊສົມບູນ; ເຂົ້າຮ່ວມເຮັດວຽກນຳຄະນະ ມີທ່ານ ຄຳພູທອນ ວົງພະຈັນ ຮອງປະທານສະພາປະຊາຊົນແຂວງ, ບັນດາທ່ານປະທານ-ຮອງປະທານຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ພະນັກງານພາຍໃນ ສພຂ; ຈຸດປະສົງຂອງການເຄື່ອນໄຫວວຽກງານຄັ້ງນີ້ ແມ່ນເພື່ອເກັບກຳ ແລະ ສຶກສາຂໍ້ມູນພື້ນຖານໃຫ້ແກ່ການກຳນົດຫົວຂໍ້, ເນື້ອໃນ ແລະ ຮູບການໃນການເຝິກອົບຮົມ, ການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງທັງເປັນການປັບປຸງການປະສານງານ ແລະ ການປະຕິບັດໜ້າທີ່ວຽກງານທີ່ກ່ຽວຂ້ອງ ລະຫວ່າງ ສນສ ກັບ ສພຂ ໄຊສົມບູນ ໃຫ້ມີຄວາມສະດວກຂຶ້ນ.

**(ນາງ ອຳໄພພອນ ແກ້ວວິໄລ)**

# ຮອງປະທານ ກວສຊ ເຄື່ອນໄຫວ ວຽກງານຢູ່ແຂວງບໍລິຄຳໄຊ



(ສພຊ) - ວັນທີ 5 ພຶດສະພາຜ່ານມາ, ທ່ານ ວຽງແກ້ວ ວັນນະຈັກ ຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວວຽກງານຢູ່ແຂວງບໍລິຄຳໄຊ ໂດຍໄດ້ເປີດກອງປະຊຸມຢູ່ສະພາປະຊາຊົນແຂວງ (ສພຂ) ເຊິ່ງມີບັນດາທ່ານຄະນະປະຈຳສະພາປະຊາຊົນແຂວງ, ຫົວໜ້າຄະນະຈັດຕັ້ງແຂວງ, ເລຂາຄະນະບໍລິຫານງານພັກເມືອງ, ສະມາຊິກສະພາປະຊາຊົນແຂວງ (ສສຂ)ປະຈຳເຂດເລືອກຕັ້ງເມືອງ ແລະ ພະນັກງານທີ່ກ່ຽວຂ້ອງຂອງ ສພຂ ເຂົ້າຮ່ວມ.

ໃນກອງປະຊຸມ, ທ່ານ ວຽງແກ້ວ ວັນນະຈັກ ໄດ້ແຈ້ງຈຸດປະສົງຂອງການເຄື່ອນໄຫວຄັ້ງນີ້ ແມ່ນເພື່ອຕິດຕາມກວດກາ, ເກັບກຳຂໍ້ມູນ ແລະ ປຶກສາຫາລື ກ່ຽວກັບວຽກງານການເລືອກຕັ້ງສະມາຊິກສະພາແຫ່ງຊາດແລະສສຂ, ວຽກງານສພຂ; ຈາກນັ້ນ, ທ່ານ ໃສຄຳ ທອງລັດ ຮອງປະທານສະພາປະຊາຊົນແຂວງ ໄດ້ລາຍງານກ່ຽວກັບໂຄງປະກອບການຈັດຕັ້ງ, ບຸກຄະລາກອນ ຂອງ ສພຂ ບໍລິຄຳໄຊ ຊຸດທີ II ແລະວຽກງານການກະກຽມການເລືອກຕັ້ງ ພ້ອມທັງສະເໜີບາງບັນຫາທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດວຽກງານຕົວຈິງໃນໄລຍະຜ່ານມາ. ນອກນີ້, ຍັງໄດ້ຮັບຟັງການມີຄຳເຫັນລາຍງານ, ປຶກສາຫາລືແລະແລກປ່ຽນບົດຮຽນເຊິ່ງກັນແລະກັນຢ່າງກົງໄປກົງມາ, ມີຈຸດສຸມ ແລະ ເຫັນໄດ້ຂໍ້ສະດວກ, ຂໍ້ຫຍຸ້ງຍາກບາງດ້ານ ແລະ ບົດຮຽນທີ່ຖອດຖອນໄດ້ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ມີຄວາມສະດວກ, ວ່ອງໄວ, ທັນເວລາ, ຖືກຕ້ອງຕາມລະບຽບຫຼັກການແລະກົດໝາຍກຳນົດໄວ້.

**(ນາງ ໂສລະຢ້າ ໄຊຍະວົງ)**

# ຫົວໜ້າກົມພົວພັນລັດຖະສະພາສອງຝ່າຍ ຢ້ຽມຢາມ ແລະ ເຮັດວຽກຢູ່ເບລາຣຸດຊີ



(ສພຊ) - ວັນທີ 8-10 ພຶດສະພາ 2025, ທ່ານ ເພັດລາ ທັນທະວົງສາ ຫົວໜ້າກົມພົວພັນລັດຖະສະພາສອງຝ່າຍ, ກຳມາທິການການຕ່າງປະເທດຂອງສະພາແຫ່ງຊາດ ຮ່ວມກັບສະມາຄົມມິດຕະພາບ ລາວ-ເບລາຣຸດຊີ ຂອງຄະນະພົວພັນຕ່າງປະເທດສູນກາງພັກປະຊາຊົນປະຕິວັດລາວ ໄດ້ສຳເລັດການເຂົ້າຮ່ວມການສະເຫຼີມສະຫຼອງວັນຄົບຮອບ 80 ປີ ແຫ່ງໄຊຊະນະຂອງປະຊາຊົນສະຫະພາບໂຊຫວຽດ ໃນມະຫາສົງຄາມປົກປ້ອງປິຕຸພູມ ທີ່ນະຄອນຫຼວງມິນສກ໌ (Minsk), ສາທາລະນະລັດເບລາຣຸດຊີ; ການສະເຫຼີມສະຫຼອງດັ່ງກ່າວ ໄດ້ຈັດຂຶ້ນໃນວັນທີ 9 ພຶດສະພາ ເຊິ່ງເປັນເຫດການທີ່ມີຄວາມໝາຍສຳຄັນອັນຍິ່ງໃຫຍ່ທາງປະຫວັດສາດໃນການຕໍ່ສູ້ສັດຕູ ເອົາຊະນະເໜືອຝາດຊິດເຢຍລະມັນ ໃນສົງຄາມໂລກຄັ້ງທີ II ປີ 1945. ພາຍຫຼັງທີ່ທ່ານ ອາເລັກຊັນເດີ ລູກາເຊນໂກ (Alexander Lukashenko) ປະທານາທິບໍດີເບລາຣຸດຊີ ໄດ້ກ່າວຄຳເຫັນເປີດພິທີສະເຫຼີມສະຫຼອງ ກໍໄດ້ມີການສວນສະໜາມຈາກກອງທັບເບລາຣຸດຊີ ເຊິ່ງປະກອບດ້ວຍ ກ້ອນກຳລັງຝູງບິນກອງທັບ, ຂະບວນພົນທະຫານຫຼາຍເຫຼົ່າທັບ, ຂະບວນລົດຍານຫຸ້ມເກາະທີ່ຕິດອາວຸດ, ຂະບວນລົດທີ່ສະແດງອາວຸດຍຸດໂທປະກອນທີ່ທັນສະໄໝ, ກ້ອນກຳລັງການສະແດງຂອງບັນດາພົນທະຫານ, ບັນດາກອງສິລະປະການສະແດງ ແລະ ກ້ອນກຳລັງອື່ນໆ ເຊິ່ງສະແດງໃຫ້ເຫັນເຖິງຄວາມພິລະອາດຫານຂອງກອງກຳລັງທຸກໝູ່ເຫຼົ່າ, ຄວາມເຂັ້ມແຂງຂອງກຳລັງແຮງທີ່ເປັນມະຫາຄວາມສະມັກຄີຂອງປວງຊົນທັງຊາດ ຂອງເບລາຣຸດຊີ ຕໍ່ຊາວໂລກ.

ວັນທີ 8 ພຶດສະພາ, ໃນໂອກາດເຂົ້າຮ່ວມການສະເຫຼີມສະຫຼອງວັນທີ່ມີຄວາມໝາຍສຳຄັນນີ້, ທ່ານຫົວໜ້າກົມພົວພັນລັດຖະສະພາສອງຝ່າຍ ໄດ້ພົບປະເຮັດວຽກກັບທ່ານ ອີກໍລາພາ ນິໂກລາຍວິດຊ໌ຮອງຫົວໜ້າຄະນະເລຂາທິການສະພາແຫ່ງຊາດແຫ່ງ ສ.ເບລາຣຸດຊີ ເພື່ອທົບທວນຄືນການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດຂອງສອງປະເທດ ໃນໄລຍະຜ່ານມາ ເຊິ່ງໄດ້ຮັບການເສີມຂະຫຍາຍນັບມື້ນັບດີຂຶ້ນກວ່າເກົ່າ; ສອງອົງການ

ອ່ານຕໍ່ໜ້າ 12

# ຄະນະຜູ້ແທນສະມາຊິກສະພາແຫ່ງຊາດໜຸ່ມ ເຂົ້າຮ່ວມ ກອງປະຊຸມປຶກສາຫາລືຂອງ YPA ຄັ້ງທີ 2




(ສພຊ) - ວັນທີ 6-7 ພຶດສະພາຜ່ານມາ, ຄະນະຜູ້ແທນສະມາຊິກສະພາແຫ່ງຊາດ ນຳໂດຍທ່ານ ປອ. ກໍລະກັນ ພົມມະວົງ ກຳມະການປະຈຳກຳມາທິການວັດທະນະທຳ-ສັງຄົມ ທັງເປັນປະທານກຳມາທິການປະຈຳວຽກງານການລົງທຶນໃສ່ຊາວໜຸ່ມຂອງເວທີປຶກສາຫາລືລັດຖະສະພາອາຊີ ກ່ຽວກັບປະຊາກອນແລະການພັດທະນາ(AFPPD) ແລະ ທ່ານ ອຸດົມ ວົງໄກສອນ ຫົວໜ້າພະແນກການຕ່າງປະເທດແຂວງບໍລິຄຳໄຊ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມປຶກສາຫາລືຂອງສະມາຊິກລັດຖະສະພາໜຸ່ມ ຂອງສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ(YPA) ຄັ້ງທີ 2 ທີ່ເຊີລານໂງຣ, ປະເທດມາເລເຊຍ ໂດຍມີຄະນະຜູ້ແທນທີ່ເປັນສະມາຊິກລັດຖະສະພາໜຸ່ມຈາກລັດຖະສະພາສະມາຊິກໄອປາ(AIPA), ກອງເລຂາ AIPA ແລະຊ່ຽວຊານທີ່ກ່ຽວຂ້ອງເຂົ້າຮ່ວມຫຼາຍກວ່າ 50 ທ່ານ.

ພິທີເປີດກອງປະຊຸມ ໄດ້ຮັບກຽດເຂົ້າຮ່ວມ ແລະ ກ່າວເປີດໂດຍທ່ານ ປອ. ຕັນ ສີຣິ ດາໂຕະ ໂຈຫາຣີ ບິນ ອັບດຸນ ປະທານສະພາຜູ້ແທນລາສະດອນມາເລເຊຍທັງເປັນປະທານ AIPA, ໂດຍທ່ານໄດ້ສະເໜີແຕ່ງຕັ້ງໃຫ້ທ່ານດາໂຕະອິນທີຣາ ໂມຊາຫາບິນ ອັບດຸນລາ ສະມາຊິກສະພາຜູ້ແທນລາສະດອນມາເລເຊຍເປັນປະທານສະມາຊິກລັດຖະສະພາໜຸ່ມໄອປາ (YPA). ໃນກອງປະຊຸມຄັ້ງນີ້, ໄດ້ມີການເປີດເວທີສົນທະນາພາຍໃຕ້ສອງຫົວຂໍ້ທີ່ສຳຄັນຄື: 1) ສົ່ງເສີມຄວາມຍືນຍົງ-ພະລັງສຽງຂອງຊາວໜຸ່ມອາຊຽນ ແລະ 2) ສ້າງການມີສ່ວນຮ່ວມຂອງຊາວໜຸ່ມອາຊຽນໂດຍໃຊ້ປະໂຫຍດຈາກດິຈິຕອນ; ຫຼັງຈາກນັ້ນ, ຄະນະຜູ້ແທນສະມາຊິກໄອປາ ກໍໄດ້ຜັດປ່ຽນກັນມີຄຳເຫັນໃນເວທີອະພິປາຍທົ່ວໄປ ພາຍໃຕ້ຫົວຂໍ້: "ຮັບປະກັນອະນາຄົດຂອງອາຊຽນ: ຊາວໜຸ່ມກັບຄວາມຍືນຍົງ ແລະ ກວມລວມ".

ໃນການເຂົ້າຮ່ວມກອງປະຊຸມຄັ້ງນີ້, ທ່ານ ປອ. ກໍລະກັນ ພົມມະວົງ ຫົວໜ້າຄະນະຜູ້ແທນລາວ ໄດ້ມີຄຳເຫັນແລກປ່ຽນ ໂດຍຍົກໃຫ້ເຫັນເຖິງສະພາບທາງດ້ານປະຊາກອນຂອງ ສປປລາວ ທີ່ມີປະຊາກອນໜຸ່ມຫຼາຍກວ່າ 50.8% ຂອງປະຊາກອນໃນປະເທດ ເຊິ່ງຈະກາຍເປັນກຳລັງແຮງໃນການຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມໃນຕໍ່ໜ້າ. ຄຽງຄູ່ກັນນັ້ນ, ທ່ານຍົກໃຫ້ເຫັນເຖິງສິ່ງທ້າທາຍຕໍ່ກັບຊາວໜຸ່ມ ໂດຍສະເພາະແມ່ນຄວາມແຕກຕ່າງທາງດ້ານການສຶກສາ, ການເຂົ້າເຖິງການບໍລິການດ້ານສຸຂະພາບ ແລະ ການປົກປ້ອງທາງດ້ານສັງຄົມ ອັນເນື່ອງມາຈາກຄວາມແຕກໂຕນທາງດ້ານການພັດທະນາໃນເຂດຫ່າງໄກສອກຫຼີກ ແລະ ຄວາມແຕກຕ່າງທາງດ້ານພາສາຂອງກຸ່ມຊົນເຜົ່າຕ່າງໆ; ພ້ອມດຽວກັນນັ້ນ, ກໍຍົກໃຫ້ເຫັນເຖິງຄວາມເອົາໃຈໃສ່ຂອງ ສປປລາວ ໃນໄລຍະຜ່ານມາຕໍ່ກັບການພັດທະນາຊາວໜຸ່ມ ແລະເຍົາວະຊົນ ໂດຍຖືວ່າ "ຊາວໜຸ່ມປຽບເໝືອນກະດູກສັນຫຼັງຂອງຊາດ" ເຊິ່ງໄດ້ສຸມໃສ່ຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊາວໜຸ່ມ ແລະ ເຍົາວະຊົນ ເພື່ອໃຫ້ຊາວໜຸ່ມທຸກຄົນໄດ້ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ຮັບປະກັນສິດເທົ່າທຽມກັນ, ມີການສົ່ງເສີມການລົງທຶນ ແລະ ຮ່ວມມືຂອງທຸກພາກສ່ວນ ໃນວຽກງານປົກປ້ອງທາງສັງຄົມ, ພັດທະນາຮອບດ້ານ ແລະ ສົ່ງເສີມການມີສ່ວນຮ່ວມຂອງຊາວໜຸ່ມຢ່າງທົ່ວເຖິງ, ຍູ້ດັນຄວາມຮັບຜິດຊອບຂອງທຸກຂະແໜງການໃນວຽກງານພັດທະນາຊາວໜຸ່ມ ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງພາຍໃນປີ 2030 ໂດຍທຸກຄົນຕ້ອງພັດທະນາໄປພ້ອມກັນ. ນອກນັ້ນ, ທ່ານຍັງຍົກໃຫ້ເຫັນເຖິງການຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດລາວ ໃນການສ້າງ ແລະ ປັບປຸງກົດໝາຍ ເພື່ອເປັນການສົ່ງເສີມການພັດທະນາຊັບພະຍາກອນມະນຸດ ແລະການໃຫ້ຄວາມສຳຄັນຕໍ່ຊາວໜຸ່ມ ພ້ອມທັງມີການຕິດຕາມກວດກາ ແລະການຈັດສັນງົບປະມານ ເພື່ອສຸມໃສ່ດ້ານການສຶກສາ ໂດຍສະພາແຫ່ງຊາດ ຊຸດທີ IX ຍັງໄດ້ແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດໜຸ່ມ ເພື່ອເປັນຕົວແທນຂອງຊາວໜຸ່ມໃນການມີສ່ວນຮ່ວມດ້ານການກຳນົດນະໂຍບາຍ ແລະ ເປັນກະບອກສຽງຂອງຊາວໜຸ່ມໃນສະພາແຫ່ງຊາດ ລວມໄປເຖິງການພົວພັນຮ່ວມມື, ການແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານ ກັບສະມາຊິກລັດຖະສະພາໜຸ່ມປະເທດເພື່ອນມິດຕ່າງໆ ໂດຍສະເພາະແມ່ນໃນເວທີ AIPA. ໃນຕອນທ້າຍ, ທ່ານໄດ້ຮຽກຮ້ອງໃຫ້ສະມາຊິກລັດຖະສະພາໜຸ່ມ AIPA ສືບຕໍ່ຍົກສູງການຮ່ວມມື ແລະ ແລກປ່ຽນບົດຮຽນເຊິ່ງກັນແລະກັນ ໃນການປັບປຸງນະໂຍບາຍ ເພື່ອຊຸກຍູ້ໃຫ້ລັດຖະບານເພີ່ມທະວີການລົງທຶນໃສ່ດ້ານການສຶກສາ, ສາທາລະນະສຸກ, ການສ້າງວຽກເຮັດງານທຳ ແລະ ການພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ໂດຍສະເພາະແມ່ນຊາວໜຸ່ມ ແນໃສ່ຮັບປະກັນໃຫ້ຄົນຮຸ່ນຕໍ່ໄປຂອງອາຊຽນ ສາມາດນຳໃຊ້ສັກກະຍະພາບສູງສຸດຂອງພວກເຂົາ ໃນການປະກອບສ່ວນເຂົ້າໃນການພັດທະນາແບບຍືນຍົງ ແລະການສ້າງຄວາມຈະເລີນຮຸ່ງເຮືອງແກ່ອາຊຽນໃນອະນາຄົດ.

ກອງປະຊຸມປຶກສາຫາລືຄັ້ງນີ້, ຄະນະຜູ້ແທນລາວ ຍັງໄດ້ຮ່ວມກັບຄະນະຜູ້ແທນຈາກສະມາຊິກ AIPA ອື່ນໆ ສຸມໃສ່ມີຄຳຄິດຄຳເຫັນຕໍ່ການປັບປຸງລະບຽບການຂອງກອງປະຊຸມ YPA ຢ່າງກົງໄປກົງມາ ແລະ ເປັນເອກະພາບ, ໂດຍຜົນຂອງການປຶກສາຫາລືຄັ້ງນີ້ ຈະຖືກນຳໄປສັງລວມສ້າງເປັນຮ່າງມະຕິເພື່ອສະເໜີເຂົ້າພິຈາລະນາໃນກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນຄັ້ງທີ 46 ເຊິ່ງຈະຂຶ້ນໃນເດືອນກັນຍາ 2025 ທີ່ນະຄອນຫຼວງກົວລາລຳເປີ, ປະເທດມາເລເຊຍ.

**(ກົມພົວພັນລັດຖະສະພາຫຼາຍຝ່າຍ)**

# ສະພາປະຊາຊົນແຂວງກີຢອງຊັງນຳ ສ.ເກົາຫຼີ ມາຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງວຽງຈັນ



(ສພຂ) - ວັນທີ 18 ເມສາຜ່ານມາ, ທ່ານບຸນສອນເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ ພ້ອມດ້ວຍຄະນະ ໄດ້ຕ້ອນຮັບຄະນະຜູ້ແທນສະພາປະຊາຊົນແຂວງກີຢອງຊັງນຳ ສ.ເກົາຫຼີ ທີ່ມາຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງວຽງຈັນ ເຊິ່ງນຳໂດຍທ່ານ ຊໍ ຮີບົງ ປະທານຄະນະກຳມະການກໍ່ສ້າງ ແລະ ດັບເພີງ; ທ່ານ ບຸນສອນ ເພັດລາວັນ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຂອບໃຈມາຍັງທ່ານ ຊໍ ຮີບົງ ທີ່ໄດ້ລະດົມຂົນຂວາຍ ແລະ ໃຫ້ການຊ່ວຍ ເຫຼືອແຂວງວຽງຈັນໃນໄລຍະຜ່ານມາ ເປັນຕົ້ນ ລົດດັບເພີງ ຈຳນວນ 2 ຄັນ ແລະ ລົດຮັບ-ສົ່ງຄົນເຈັບ ຈຳນວນ 11 ຄັນ ພ້ອມດ້ວຍອຸປະກອນຮັບໃຊ້ໃນລົດ ເພື່ອເປັນການກຽມພ້ອມຮັບ-ສົ່ງຄົນເຈັບທີ່ໄດ້ຮັບອຸບັດເຫດ, ຜົນກະທົບຈາກໄພພິບັດຕ່າງໆ ໃຫ້ໄດ້ຮັບການຊ່ວຍເຫຼືອຢ່າງວ່ອງໄວ ແລະ ທັນເວລາ.

**(ນາງ ບຸລາຕີ ແສນທະວົງ)**

# ພິທີປະກາດການຈັດຕັ້ງແລະມອບ-ຮັບໜ້າທີ່



(ສພຂ) - ວັນທີ 28 ເມສາຜ່ານມາ ທີ່ສະພາປະຊາຊົນແຂວງຈຳປາສັກ ໄດ້ມີພິທີປະກາດການຈັດຕັ້ງ ແລະ ມອບ-ຮັບໜ້າທີ່ ລະຫວ່າງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ (ຄສຜງ) ຜູ້ເກົ່າກັບຜູ້ໃໝ່ ໂດຍການເປັນປະທານຂອງທ່ານ ແກ້ວລັດຕະນະ ສີຫາວົງ ຄະນະປະຈຳພັກແຂວງ, ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ); ມີບັນດາກຳມະການໃນ ຄປຈສພຂ, ຄະນະຈັດຕັ້ງແຂວງ, ການນຳພະແນກການ, ຫົວໜ້າ-ຮອງຫົວໜ້າຂະແໜງການ ແລະ ລັດຖະກອນວິຊາການ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ, ທ່ານ ປອ. ສົມສັກ ແສງສັກດາ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ (ຜູ້ເກົ່າ) ໄດ້ຂຶ້ນຜ່ານບົດລາຍງານໂດຍສັງເຂບກ່ຽວກັບການເຄື່ອນໄຫວວຽກງານຂອງ ຄສຜງ ໃນໄລຍະ 4 ປີຜ່ານມາ. ທ່ານ ທິບພະສອນ ສາມາເລີກ ເລຂາທິການສະພາປະຊາຊົນແຂວງ ໄດ້ຜ່ານມະຕິ 3 ສະບັບຄື: ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງສະບັບເລກທີ 12/ຄປຈ.ສພຂ, ລົງວັນທີ 21 ມັງກອນ 2025 ວ່າດ້ວຍການຮັບຮອງເອົາການສະເໜີຍົກຍ້າຍທ່ານ ປອ. ສົມສັກ ແສງສັກດາ ກຳມະການຄະນະປະຈຳ, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ໄປຮັບໜ້າທີ່ໃໝ່ຢູ່ອົງການກວດສອບປະຈຳພາກໃຕ້; ມະຕິຂອງຄະນະປະຈຳສະພາແຫ່ງຊາດສະບັບເລກທີ 66/ຄປຈ, ລົງວັນທີ 4 ມີນາ 2025 ວ່າດ້ວຍການແຕ່ງຕັ້ງປະທານອົງການກວດສອບປະຈຳພາກໃຕ້; ມະຕິຂອງຄະນະປະຈຳສະພາປະຊາຊົນແຂວງ ສະບັບເລກທີ 37/ຄປຈ.ສພຂ, ລົງວັນທີ 4 ເມສາ 2025 ວ່າດ້ວຍການແຕ່ງຕັ້ງທ່ານອະນຸສັກ ຈັນທະປະເສີດ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ເປັນກຳມະການຄະນະປະຈຳສະພາປະຊາຊົນແຂວງ, ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ. ທ່ານ ບຸນມີ ດວງມີສີ ຮອງຫົວໜ້າຄະນະຈັດຕັ້ງແຂວງ ໄດ້ຂຶ້ນຜ່ານມະຕິຂອງຄະນະປະຈຳພັກແຂວງ ສະບັບເລກທີ 298/ຄຈພຂ.ຈສ, ລົງວັນທີ 8 ເມສາ 2025 ວ່າດ້ວຍການບົ່ງຕົວແຕ່ງຕັ້ງຄະນະໜ່ວຍພັກຮາກຖານສະພາປະຊາຊົນແຂວງ ຄື: ສະຫາຍ ອະນຸສັກ ຈັນທະປະເສີດ ປະທານກວດການໜ່ວຍພັກ, ເປັນຮອງເລຂາໜ່ວຍພັກຮາກຖານ; ສະຫາຍ ທິບພະສອນ ສາມາເລີກ ຫົວໜ້າຈຸພັກ, ເປັນປະທານກວດການໜ່ວຍພັກຮາກຖານ. ຈາກນັ້ນ, ກໍໄດ້ມີການເຊັນບົດບັນທຶກການມອບ-ຮັບໜ້າທີ່ລະຫວ່າງທ່ານ ປອ. ສົມສັກ ແສງສັກດາ ກັບທ່ານ ອະນຸສັກ ຈັນທະປະເສີດ.

ຕອນທ້າຍ, ທ່ານ ແກ້ວລັດຕະນະສີຫາວົງ ໄດ້ມີຄຳເຫັນໂອລົມຊີ້ທິດເຍືອງທາງເພື່ອເປັນບ່ອນອີງໃນການນຳພາ-ຊີ້ນຳວຽກງານຮອບດ້ານ ໃຫ້ມີຜົນສຳເລັດໃໝ່ໃຫຍ່ຫຼວງກວ່າເກົ່າ.

**(ຂ່າວ: ສົມວິຈິດ ໄຊມົນຕີ, ພາບ: ອໍລະດີ ເກດດາ)**

# ຕິດຕາມກວດກາຄວາມຄືບໜ້າການກໍ່ສ້າງທາງເວັ້ນ ແລະ ທົບທວນຄືນການປະຕິບັດບົດບັນທຶກຮ່ວມ



(ສພຂ) - ວັນທີ 2 ພຶດສະພາຜ່ານມາ, ທ່ານ ໃສຄຳທອງລັດ ຮອງປະທານສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາຄວາມຄືບໜ້າໂຄງການກໍ່ສ້າງທາງເວັ້ນຕົວເມືອງປາກຊັນ ຂອງບໍລິສັດ ພູທອນພັດທະນາຄົບວົງຈອນ ຈຳກັດຜູ້ດຽວ ເຊິ່ງໄດ້ຮັບຟັງຄວາມຄືບໜ້າການຈັງຕັ້ງປະຕິບັດໂຄງການດັ່ງກ່າວຈາກຂອງເຈົ້າຂອງໂຄງການ ກໍຄືພະແນກໂຍທາທິການ ແລະ ຂົນສົ່ງແຂວງ ໂດຍໃຫ້ຮູ້ວ່າ: ຕໍ່ກັບສັນຍາທີ 1 ປັດຈຸບັນສາມາດປະຕິບັດໜ້າວຽກໄດ້ 16.5% ເຊິ່ງພາຫະນະກົນຈັກປະກອບສ່ວນຢູ່ໃນພາກສະໜາມມີ 50 ກວ່າຄັນ; ສັນຍາທີ 2 ສາມາດປະຕິບັດໜ້າວຽກໄດ້6.6% ເຊິ່ງພາຫະນະກົນຈັກປະກອບສ່ວນຢູ່ໃນພາກສະໜາມມີ 30 ກວ່າຄັນ; ສັນຍາທີ 3 ຍັງຢູ່ໃນຂັ້ນຕອນການສຳຫຼວດອອກແບບ.

ກ່ອນໜ້ານັ້ນ ຄືວັນທີ 29 ເມສາ ທີ່ສະພາປະຊາຊົນແຂວງ, ທ່ານ ໃສຄຳ ທອງລັດ ໄດ້ເປັນປະທານກອງປະຊຸມທົບທວນຄືນກ່ຽວກັບການຈັດຕັ້ງປະຕິບັດບົດບັນທຶກຮ່ວມກັບພາກສ່ວນກ່ຽວຂ້ອງໃນຂົງເຂດວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ເຊິ່ງມີບັນດາທ່ານປະທານ-ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຕາງໜ້າພະແນກການ ແລະ ອົງການທີ່ກ່ຽວຂ້ອງຂອງແຂວງ 10 ພາກສ່ວນ ພ້ອມດ້ວຍພະນັກງານທີ່ກ່ຽວຂ້ອງຂອງສພຂເຂົ້າຮ່ວມ.

ກອງປະຊຸມໄດ້ທົບທວນຄືນການຈັດຕັ້ງປະຕິບັດບົດບັນທຶກການພົວພັນປະສານງານລະຫວ່າງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ກັບບັນດາພະແນກການ, ອົງການ 10 ພາກສ່ວນເຊິ່ງເຫັນວ່າຫຼາຍວຽກງານໄດ້ຮັບການເອົາໃຈໃສ່ ແລະ ໄດ້ຮັບຜົນສຳເລັດເປັນຢ່າງດີເປັນຕົ້ນແມ່ນການປະສານສົມທົບແລະຂອດການປະສານງານລະຫວ່າງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ກັບພາກສ່ວນກ່ຽວຂ້ອງແມ່ນມີຄວາມສະ ດວກຫຼາຍຂຶ້ນ, ການສະໜອງຂໍ້ມູນມີຄວາມຈະແຈ້ງ, ສາມາດຜັນຂະຫຍາຍມະຕິຕ່າງໆແລະຖືກຈັດຕັ້ງປະຕິບັດຢ່າງກວ້າງຂວາງ ລົງຮອດຮາກຖານທ້ອງຖິ່ນ; ນອກນັ້ນ, ຍັງໄດ້ຄົ້ນຄວ້າ, ປຶກສາຫາລື, ສົນທະນາແລກປ່ຽນຖອດຖອນບົດຮຽນ ແລະ ປະກອບຄຳຄິດຄຳເຫັນຕໍ່ຂໍ້ຄົງຄ້າງຈຳນວນໜຶ່ງ ເພື່ອນຳໄປປັບປຸງ, ແກ້ໄຂ ແລະ ພັດທະນາໃຫ້ດີຂຶ້ນເຮັດໃຫ້ວຽກງານໄດ້ຮັບປະສິດທິຜົນສູງ.

**(ນາງ ໂສລະຢ້າ ໄຊຍະວົງ)**

# ກອງປະຊຸມ ຄປຈສພຂ ຈຳປາສັກ ປະຈຳເດືອນເມສາ



(ສພຂ) - ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ (ຄປຈສພຂ) ຈຳປາສັກ ປະຈຳເດືອນເມສາ 2025 ດຳເນີນເມື່ອວັນສຸກທີ 2 ພຶດສະພາຜ່ານມາ ໂດຍການເປັນປະທານຂອງທ່ານ ສາຍທອງ ໄຊຍະວົງ ຮອງເລຂາພັກແຂວງ, ປະທານຄະນະປະຈຳສະພາປະຊາຊົນແຂວງເຊິ່ງມີບັນດາທ່ານຮອງປະທານຄະນະກຳມະການ, ຄະນະເລຂາທິການ ແລະ ພະນັກງານທີ່ກ່ຽວຂ້ອງພາຍໃນ ສພຂ ເຂົ້າຮ່ວມນຳ.

ກອງປະຊຸມໄດ້ຄົ້ນຄວ້າພິຈາລະນາຫຼາຍບັນຫາສຳຄັນຄື: ໜັງສືສະເໜີຂອງອົງການປົກຄອງແຂວງ ສະບັບເລກທີ 02/ອປຄຂ.ຈສ, ລົງວັນທີ 28 ເມສາ2025ກ່ຽວກັບການຈັດສັນແຜນບ້ວງເງິນເກັບລາຍຮັບເກີນແຜນປີ 2024 ຂອງແຂວງຈຳປາສັກ;ຮັບຟັງການລາຍງານຜົນການລົງເຄື່ອນໄຫວວຽກງານຮ່ວມກັບກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ຢູ່ບັນດາຈຸດເປົ້າໝາຍຂອງແຂວງ;ການລາຍງານແຜນການລົງເຄື່ອນໄຫວຊຸກຍູ້ວຽກງານປັບປຸງກົງຈັກການຈັ້ດຕັ້ງ ແລະ ການກະກຽມຫ້ອງເຮັດວຽກໃຫ້ແກ່ຄະນະສະມາຊິກສະພາປະຊາຊົນແຂວງ (ຄສຂ) ປະຈຳເຂດເລືອກຕັ້ງ 9 ເມືອງ, 1 ນະຄອນ; ຄົ້ນຄວ້າກ່ຽວກັບຕຳແໜ່ງງານຂອງຫົວໜ້າ ຄສຂ ປະຈຳເຂດເລືອກຕັ້ງເມືອງ, ນະຄອນ; ໜັງສືສະເໜີແຕ່ງຕັ້ງຮອງເລຂາທິການສະພາປະຊາຊົນແຂວງ ແລະ ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານປິ່ນອ້ອມຂອງ ສພຂ. ຈາກນັ້ນ, ກໍໄດ້ມີການປະກອບຄຳຄິດເຫັນຕໍ່ເນື້ອໃນທີ່ນຳເຂົ້າມາຄົ້ນຄວ້າພິຈາລະນາ ຢ່າງກົງໄປກົງມາ ບົນພື້ນຖານຄວາມຖືກຕ້ອງສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ຄວາມເປັນເອກະພາບ, ຮັບປະກັນໃຫ້ບັນດາເນື້ອໃນທີ່ພິຈາລະນາຮັບຮອງ ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ ແລະ ເກີດຜົນປະໂຫຍດສູງສຸດ.

ທ່ານ ສາຍທອງ ໄຊຍະວົງ ໄດ້ມີຄຳເຫັນ ແລະ ໃຫ້ທິດຊີ້ນຳຕໍ່ 3 ຄະນະກຳມະການ ແລະ ຄະນະເລຂາທິການ ທີ່ເປັນເສນາທິການໃຫ້ຄະນະປະຈຳສະພາປະຊາຊົນແຂວງ ໂດຍເນັ້ນໜັກໃຫ້ເອົາເນື້ອໃນຈິດໃຈຂອງກອງປະຊຸມຄັ້ງນີ້ໄປຈັດຕັ້ງປະຕິບັດ ໂດຍການປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການກະກຽມຮ່າງເອກະສານ, ການສ້າງແຜນ, ການອອກແຈ້ງການເຖິງບັນດາເປົ້າໝາຍ ແລະ ການລາຍງານຂໍທິດຊີ້ນຳຈາກຂັ້ນເທິງໃນການຈັດຕັ້ງປະຕິບັດວຽກງານ ເພື່ອໃຫ້ວຽກງານດັ່ງກ່າວ ສາມາດຈັດຕັ້ງປະຕິບັດສຳເລັດຕາມການຕົກລົງ ແລະ ຮັບປະກັນຄວາມຖືກຕ້ອງສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ທ່ວງທັນກັບສະພາບການ.

**(ສົມວິຈິດ ໄຊມົນຕີ)**



## ກວດກາເນື້ອໃນ...

(ຕໍ່ຈາກໜ້າ 1)

ຈາກພາກສ່ວນທີ່ກ່ຽວຂ້ອງ.

ທ່ານຄຳໃບ ດຳລັດກ່າວວ່າ: ຮ່າງກົດໝາຍວ່າດ້ວຍຢາ ແລະຜະລິດຕະພັນການແພດສະບັບປັບປຸງນີ້ ກ່ອນທີ່ລັດຖະບານຈະສະເໜີຫາຄະນະປະຈຳສະພາແຫ່ງຊາດ, ກະຊວງສາທາລະນະສຸກ ກໍໄດ້ສົມທົບກັບພາກສ່ວນກ່ຽວຂ້ອງດຳເນີນການຄົ້ນຄວ້າປັບປຸງຕາມຂັ້ນຕອນຂອງການສ້າງນິຕິກຳແລ້ວ; ສະນັ້ນ, ການຈັດກອງປະຊຸມໃນຄັ້ງນີ້ ຈຶ່ງມີຄວາມສຳຄັນຫຼາຍ ເພາະຈະໄດ້ຄົ້ນຄວ້າເນື້ອໃນຢ່າງລະອຽດ, ຮອບດ້ານ ແນໃສ່ເຮັດໃຫ້ຮ່າງກົດໝາຍມີເນື້ອໃນຄົບຖ້ວນ, ຮັດກຸມ ແລະ ສາມາດນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ9 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະມາເຖິງນີ້.

ຜູ້ເຂົ້າຮ່ວມໄດ້ເປັນເຈົ້າການຄົ້ນຄວ້າ ແລະ ປະກອບຄຳຄິດເຫັນຕໍ່ບັນດາເນື້ອໃນຮ່າງກົດໝາຍ ທີ່ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການຕົນ ແລະ ມີຄຳເຫັນລົງເລິກແຕ່ລະພາກ, ໝວດ, ມາດຕາໃນນັ້ນ, ມີຫຼາຍເນື້ອໃນຂອງຫຼາຍມາດຕາ ໄດ້ຮັບການປັບປຸງໃຫ້ມີຄວາມຄົບຖ້ວນ, ຮັດກຸມ ແລະ ຊັດເຈນກວ່າເກົ່າ.

**(ສອນສັກ ວັນວິໄຊ)**

# ສພຂ ໄຊສົມບູນ ຕິດຕາມກວດກາຜົນກະທົບດ້ານສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ



(ສພຂ)-ວັນທີ28-30 ເມສາຜ່ານມາ, ສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ໄດ້ເຄື່ອນໄຫວຕິດຕາມກວດກາຜົນກະທົບດ້ານສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ບາງໂຄງການລົງທຶນຂອງເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ຢູ່ເມືອງລ້ອງແຈ້ງແລະເມືອງຮົ່ມ;ເມືອງລ້ອງແຈ້ງນຳໂດຍທ່ານຄຳພູທອນ ວົງພະຈັນ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ພົທ. ຄຳໝັ້ນ ພິມມະວົງສາ ປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ; ເມືອງຮົ່ມນຳໂດຍທ່ານ ສົມດີ ຈັນທະວົງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ທ່ານ ນາງ ຄຳຫຼ້າ ທອງສີວອນ ຮອງປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ.

ຈຸດປະສົງເພື່ອຈັດຕັ້ງປະຕິບັດແຜນກິດຈະກຳການເຄື່ອນໄຫວວຽກງານປະຈຳປີ 2025 ຂອງສະພາປະຊາຊົນແຂວງ ກໍຄືແຜນການຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ໃຫ້ສຳເລັດຕາມຄາດໝາຍທີ່ກຳນົດໄວ້; ເພື່ອຕິດຕາມກວດກາ, ເກັບກຳຂໍ້ມູນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ໃນການຈັດຕັ້ງປະຕິບັດຈາກຂະແໜງການກ່ຽວຂ້ອງ ແລະ ພາກສະໜາມຕົວຈິງຂອງບໍລິສັດ ມາວິເຄາະ, ວິໄຈ, ຊອກໃຫ້ເຫັນຂໍ້ດີ, ຂໍ້ຄົງຄ້າງ ແລະ ສາເຫດທີ່ພາໃຫ້ເກີດບັນຫາ ເພື່ອນຳມາສະເໜີໃຫ້ຂະແໜງການກ່ຽວຂ້ອງກໍຄືລັດຖະບານຊອກຫາທິດທາງປັບປຸງແກ້ໄຂໃນຕໍ່ໜ້າ ທັງເປັນການຊຸກຍູ້ຂະແໜງການກ່ຽວຂ້ອງ ໃຫ້ມີການຕິດຕາມກວດກາ ແລະ ຄຸ້ມຄອງ ເພື່ອຫຼີກລ່ຽງບັນຫາຜົນກະທົບທາງສິ່ງແວດລ້ອມ-ສັງຄົມແລະທຳມະຊາດ ຈາກການຂຸດຄົ້ນແຮ່ທາດຕ່າງໆ ໃຫ້ປະຕິບັດຕາມສັນຍາທີ່ກຳນົດໄວ້.

ໃນການເຄື່ອນໄຫວ, ໄດ້ເປີດກອງປະຊຸມຮ່ວມກັບອົງການປົກຄອງເມືອງ ເພື່ອຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 61/ນຍ, ດຳລັດຂອງລັດຖະບານ ສະບັບເລກທີ 414/ລບ ແລະ ສະບັບເລກທີ 141/ລບ ໂດຍສະເພາະລົງເລິກກວດກາການສຳຫຼວດ, ຂຸດຄົ້ນ ແລະ ສົ່ງອອກແຮ່ທາດຕ່າງໆ ຢູ່ພາຍໃນເມືອງ; ຈາກນັ້ນ, ຄະນະປະຈຳ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ມີການຊັກຖາມ ແລະ ເຈາະຈີ້ມຕໍ່ພາກສ່ວນທີ່ກ່ຽວຂ້ອງກ່ຽວກັບບາງບັນຫາທີ່ຍັງແກ້ໄຂບໍ່ໄດ້ ແລະ ແກ້ໄຂໄປແລ້ວໃນໄລຍະຜ່ານມາ.

ຫຼັງຈາກນັ້ນ, ໄດ້ລົງຕິດຕາມກວດກາການຈັດຕັ້ງປະຕິບັດຕົວຈິງຢູ່ພາກສະໜາມຂອງບັນດາບໍລິສັດເມືອງລ້ອງແຈ້ງ ຄື: ບໍລິສັດ ໂຊກມະນີ ມາຍນິງ ຈຳກັດ ໂຄງການຂຸດຄົ້ນປຸງແຕ່ງແຮ່ຄຳ ເຂດບ້ານນ້ຳຜາໃຫຍ່ ແລະ ບ້ານນ້ຳຊານ, ບໍລິສັດ ໂຈ້ບຸນມີ ກຣຸບ ຈຳກັດຜູ້ດຽວ ໂຄງການສຳຫຼວດແຮ່ຄຳ ແລະ ແຮ່ຕິດພັນ ຢູ່ບ້ານນາຕີ, ບໍລິສັດຫຼົງຈ່ຽງ ມາຍນິງ ຈຳກັດ ໂຄງການຂຸດຄົ້ນແລະປຸງແຕ່ງແຮ່ຊືນ ແລະ ແຮ່ສັງກະສີ ຢູ່ບ້ານນ້ຳຊານ, ບໍລິສັດ ປອງແສງການລົງທຶນ ຈຳກັດຜູ້ດຽວ ໂຄງການສຳປະທານຕັດໄມ້ປ່ອງ ແລະ ສ້າງໂຮງງານແປຮູບຜະລິດຕະພັນໄມ້ປ່ອງ ແລະ ອັດຖ່ານຂາວແທ່ງ ຢູ່ບ້ານນ້ຳຊານໃນເນື້ອທີ່60ເຮັກຕາແລະສົ່ງເສີມປູກໄມ້ປ່ອງແລະເກັບຊື້ຢູ່ທົ່ວແຂວງໄຊສົມບູນ.

ການເຄື່ອນໄຫວຄັ້ງນີ້ ໄດ້ຮັບການສະໜັບສະໜູນງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດໃນການຄົ້ນຄວ້າແລະປັບປຸງນິຕິກຳຂອງມູນນິທິເອເຊຍ (TAF).

**(ແສງຕາວັນ ລັດຕະນະວົງ)**



## ປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 8-14 ພຶດສະພາຜ່ານມາ, ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະຈາກສະພາແຫ່ງຊາດ ແລະຕາງໜ້າຈາກກົມທີ່ດິນແລະກົມກວດກາສິ່ງແວດລ້ອມ, ກະຊວງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ;ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້; ກົມຂົນສົ່ງ ແລະ ກົມຂົວທາງ, ກະຊວງໂຍທາທິການແລະຂົນສົ່ງ;ກົມຄຸ້ມຄອງຊັບສິນຂອງລັດ, ກະຊວງການເງິນ ໄດ້ລົງເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດກ່ຽວກັບບາງວຽກງານໃນຂົງເຂດເສດຖະກິດ ເປັນຕົ້ນ: ການອຳນວຍຄວາມສະດວກທາງດ້ານການຂົນສົ່ງສິນຄ້າພາຍໃນ, ລະຫວ່າງປະເທດ ແລະ ຜ່ານແດນ; ການຈັດຕັ້ງປະຕິບັດວຽກງານສົ່ງເສີມການຜະລິດເປັນສິນຄ້າ ເພື່ອຄ້ຳປະກັນສະບຽງອາຫານ ແລະ ເປັນສິນຄ້າສົ່ງອອກ ເພື່ອຫຼຸດຜ່ອນການນຳເຂົ້າ; ການຈັດຕັ້ງປະຕິບັດວຽກງານຂຶ້ນທະບຽນອອກໃບຕາດິນ, ການປະຕິບັດພັນທະຄ່າເຊົ່າ, ສຳປະທານທີ່ດິນ ແລະບັນຫາຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະທຳມະຊາດ ຢູ່ແຂວງວຽງຈັນແລະແຂວງຫຼວງພະບາງ.

ທ່ານ ນາງ ປິ່ງຄຳ ລາຊະສິມມາ ພ້ອມດ້ວຍຄະນະ ໄດ້ເຂົ້າພົບເຈົ້າແຂວງໆວຽງຈັນ ແລະ ເຈົ້າແຂວງໆຫຼວງພະບາງ ເພື່ອແຈ້ງຈຸດປະສົງຂອງການເຄື່ອນໄຫວຕິດຕາມກວດກາແລະຊຸກຍູ້ການຈັດຕັ້ງປະຕິບັດບາງວຽກງານໃນຂົງເຂດເສດຖະກິດໃນຄັ້ງນີ້. ຈາກນັ້ນ, ໄດ້ຈັດກອງປະຊຸມຮ່ວມກັບຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ ເຊິ່ງປະກອບມີ: ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ, ພະລັງງານ ແລະ ບໍ່ແຮ່, ກະສິກຳ ແລະປ່າໄມ້, ອຸດສາຫະກຳ ແລະ ການຄ້າ, ໂຍທາທິການ ແລະ ຂົນສົ່ງ, ການເງິນ ເພື່ອຮັບຟັງການລາຍງານການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ໂດຍສະເພາະ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 12/ນຍ, ລົງວັນທີ16ຕຸລາ2019ວ່າດ້ວຍການອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ-ສົ່ງອອກ, ການນຳເຂົ້າຊົ່ວຄາວ, ການຜ່ານແດນ ແລະ ເຄື່ອນຍ້າຍສິນຄ້າ ຢູ່ ສປປ ລາວ; ກົດໝາຍວ່າດ້ວຍທີ່ດິນ ແລະ ນິຕິກຳໃຕ້ກົດໝາຍທີ່ພົວພັນກັບວຽກງານທີ່ດິນລວມທັງການຈັດຕັ້ງຜັນຂະຫຍາຍມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ57/ຄປຈ, ລົງວັນທີ31ພຶດສະພາ2024ວ່າດ້ວຍການພິຈາລະນາຮັບຮອງເອົາການຮັບຮູ້ສິດນຳໃຊ້ທີ່ດິນໃນເຂດທີ່ດິນປ່າໄມ້; ຄຳສັ່ງຂອງນາຍົກລັດຖະມົນຕີສະບັບເລກທີ20/ລບ, ລົງວັນທີ 05 ພະຈິກ 2024 ໂດຍສະເພາະວຽກງານການຂຶ້ນທະບຽນອອກໃບຕາດິນ; ການຈັດຕັ້ງປະຕິບັດວຽກງານຂອງບັນດາໂຄງການລົງທຶນຈຳນວນໜຶ່ງທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ; ການຈັດຕັ້ງປະຕິບັດບັນດາປັດໄຈການຜະລິດທີ່ສຳຄັນ ທີ່ເປັນການປະກອບສ່ວນຊຸກຍູ້ວຽກງານສົ່ງເສີມການຜະລິດ ເພື່ອຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າສົ່ງອອກ, ຫຼຸດຜ່ອນການນຳເຂົ້າ. ຜູ້ເຂົ້າຮ່ວມໄດ້ແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາ ເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍ ແລະ ຂໍ້ຄົງຄ້າງທີ່ຕ້ອງໄດ້ຊອກວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຂົງເຂດດັ່ງກ່າວ ມີຄຸນນະພາບດີ, ຖືກຕ້ອງຕາມກົດໝາຍ.

ໂອກາດນີ້, ຫົວໜ້າຄະນະ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄວາມພະຍາຍາມຂອງຂະແໜງການຕ່າງໆ ແລະ ມີຄຳເຫັນຊີ້ນຳໃຫ້ແຕ່ລະພະແນກການ ເພີ່ມທະວີເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ ໃຫ້ມີປະສິດທິພາບ ແລະປະສິດທິຜົນດີຂຶ້ນກວ່າເກົ່າ, ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ວາງອອກຢ່າງເຂັ້ມງວດບໍ່ໃຫ້ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທຳມະຊາດ.

ນອກຈາກນີ້, ຄະນະຍັງໄດ້ລົງຢ້ຽມຢາມສະຖານທີ່ຕົວຈິງ ເພື່ອຮັບຟັງການລາຍງານ, ຂໍ້ສະເໜີຕ່າງໆ ຂອງຜູ້ພັດທະນາໂຄງການ, ບັນດາບໍລິສັດ ເປັນຕົ້ນ: ໂຮງງານຜະລິດຢາງພາລາ ຂອງບໍລິສັດ ລາວ-ໄທຮົ້ວ, ຈຸດຄ່ຽນຖ່າຍສິນຄ້າ ສະຖານີລົດໄຟລາວ-ຈີນຢູ່ເມືອງໂພນໂຮງ,ລານພັກແຮ່ຂອງບໍລິສັດຣຸຍຫົງ ເມືອງວັງວຽງ ແຂວງວຽງຈັນ; ຈຸດຄ່ຽນຖ່າຍສູນການຄ້າຫຼວງພະບາງ BLT ແລະ ສາງສິນຄ້າຈຳກັດຂອງກຸ່ມບໍລິສັດ ສາກົນ ລາວ-ໄທ ແລະ ຮັບຟັງຄຳຄິດຄຳເຫັນຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຂຸດຄົ້ນ ແລະ ປຸງແຕ່ງແຮ່ທອງ ຂອງບໍລິສັດ ແມ່ຂອງຣິເວີ ມາຍນິງ (ລາວ) ຈຳກັດ ເມືອງຈອມເພັດ ແຂວງຫຼວງພະບາງ.



## ຮອງປະທານ...

(ຕໍ່ຈາກໜ້າ 1)

ແຂວງຊຽງຂວາງ.

ໃນໄລຍະເຮັດວຽກຢູ່ທັງສອງແຂວງ, ທ່ານຮອງປະທານສະພາແຫ່ງຊາດ ແລະ ຄະນະ ໄດ້ພົບປະກັບທ່ານ ພອຍຄຳ ຮຸ່ງບຸນຍວງເລຂາພັກແຂວງ, ເຈົ້າແຂວງໆໄຊສົມ ບູນ ແລະ ທ່ານ ບຸນຈັນ ສິວົງພັນກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໆຊຽງຂວາງ ເຊິ່ງໄດ້ແຈ້ງຈຸດປະສົງຂອງການມາເຄື່ອນໄຫວໃນຄັ້ງນີ້ ແມ່ນເພື່ອຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທຳມະນູນ, ບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃນຂົງເຂດວຽກງານການຕ່າງປະເທດ, ບັນດາສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ; ທັງເປັນການປະຕິບັດຕາມແຜນການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ໃນການຊຸກຍູ້ການຈັດຕັ້ງປະຕິບັດໂຄງການລົງທຶນຂະໜາດໃຫຍ່ທີ່ເປັນບຸລິມະສິດຂອງຊາດ, ໂຄງການຮ່ວມມືລະຫວ່າງສອງລັດຖະບານ ລາວ-ຫວຽດນາມ ແລະ ສະພາບການຄຸ້ມຄອງໂຄງການຊ່ວຍເຫຼືອລ້າເພື່ອການພັດທະນາ (ODA) ຢູ່ຕາມເຂດຈຸດສຸມພັດທະນາ ແລະ ບໍລິເວນຊາຍແດນ, ຕິດຕາມຊຸກຍູ້ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການປຸກສ້າງຕຶກສະພາປະຊາຊົນແຂວງຊຽງຂວາງ ແລະ ໄຊສົມບູນ ແລະ ໄດ້ຮັບຟັງລາຍງານຂອງການນຳທັງ 2 ແຂວງ ກ່ຽວກັບສະພາບການພັດທະນາເສດຖະກິດ-ສັງຄົມ, ການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ແລະ ຂໍ້ສະເໜີຈຳນວນໜຶ່ງຂອງແຂວງ.

ຄະນະໄດ້ພົບປະກັບທ່ານປະທານສະພາປະຊາຊົນແຂວງພ້ອມດ້ວຍການນຳຂອງພະແນກການທີ່ກ່ຽວຂ້ອງຂອງທັງ 2 ແຂວງ ເຊິ່ງປະທານສະພາປະຊາຊົນແຂວງ ແລະ ພະແນກການຕ່າງໆຂອງແຂວງ ໄດ້ລາຍງານການເຄື່ອນໄຫວຕາມ 3 ພາລະບົດບາດຂອງສະພາປະຊາຊົນແຂວງ; ການນຳຂອງພະແນກແຜນການ ແລະ ການລົງທຶນ, ພະແນກການຕ່າງປະເທດ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກອຸດສາຫະກຳ ແລະ ການຄ້າ, ແລະ ກອງບັນຊາການ ປກສ ແຂວງ ຕ່າງກໍໄດ້ລາຍງານສະພາບການເຄື່ອນໄຫວຂອງຕົນໃຫ້ຄະນະຊາບທັງຍົກໃຫ້ເຫັນດ້ານດີ, ຂໍ້ສະດວກພ້ອມຂໍ້ຫຍຸ້ງຍາກແລະຂໍ້ສະເໜີຈຳນວນໜຶ່ງ.

ໃນການພົບປະການນຳຂອງທັງ 2 ແຂວງ, ສະພາປະຊາຊົນແຂວງ ແລະ ພະແນກການອ້ອມຂ້າງທັງ 2 ແຂວງ, ຮອງປະທານສະພາແຫ່ງຊາດ ໄດ້ເນັ້ນໃຫ້ທັງສອງແຂວງ ສືບຕໍ່ນຳໃຊ້ທ່າແຮງບົ່ມຊ້ອນຂອງຕົນເຂົ້າໃນການພັດທະນາ, ສືບຕໍ່ອຳນວຍຄວາມສະດວກແກ່ບັນດາບໍລິສັດ-ນັກລົງທຶນຕ່າງປະເທດ ເພື່ອສ້າງລາຍຮັບຫຼາຍຂຶ້ນໃຫ້ແກ່ປະຊາຊົນ, ສ້າງໃຫ້ມີພື້ນຖານອຸດສາຫະກຳໃນການຜະລິດ; ໄດ້ເນັ້ນໃຫ້ເອົາໃຈໃສ່ປະຕິບັດກົນໄກການປະສານງານລະຫວ່າງຂະແໜງການ, ສະພາປະຊາຊົນແຂວງກັບອຳນາດການປົກຄອງແຂວງເພື່ອປະຕິບັດວຽກງານໃຫ້ໄປລວງດຽວກັນ ໂດຍສະເພາະການປະສານງານໃນການສ້າງແຮງງານສະໜອງໃຫ້ແກ່ຜູ້ປະກອບການ, ການແກ້ໄຂບັນຫາຂໍ້ສະເໜີຂອງຜູ້ປະກອບການຢ່າງເໝາະສົມ; ສືບຕໍ່ແຂ່ງຂັນສ້າງຜົນງານ 2 ວັນປະຫວັດສາດ (ຄົບຮອບ 50 ປີ ວັນສ້າງຕັ້ງ ສປປລາວ ແລະ ຄົບຮອບ 105 ປີ ວັນເກີດປະທານ ໄກສອນ ພົມວິຫານ) ໄປຄຽງຄູ່ກັບການເປີດກອງປະຊຸມໃຫຍ່ຂອງເມືອງ, ແຂວງ ໃຫ້ໄປຕາມແຜນການ.

ການລົງເຄື່ອນໄຫວຢ້ຽມຢາມໃນຄັ້ງນີ້, ຄະນະຍັງໄດ້ເຮັດວຽກ ແລະ ຢ້ຽມຢາມບໍລິສັດຮ່ວມມືພັດທະນາບໍ່ແຮ່ ໄຊສົມບູນ ຈຳກັດ, ລົງເບິ່ງໂຄງການກໍ່ສ້າງຕຶກສະພາປະຊາຊົນແຂວງ ແລະ ໄດ້ເດີນທາງໄປມອບອຸປະກອນການຮຽນ, ເຄື່ອງນຸ່ງຫົ່ມ, ຜ້າຫົ່ມ ແລະ ເຄື່ອງອຸປະໂພກ-ບໍລິໂພກ ຈຳນວນໜຶ່ງ ລວມມູນຄ່າ 24 ລ້ານກວ່າກີບ ໃຫ້ແກ່ນ້ອງນັກຮຽນທີ່ໂຮງຮຽນປະຖົມບ້ານຖ້ຳໂລ້ ເມືອງອານຸວົງ; ຢູ່ແຂວງຊຽງຂວາງ, ຄະນະໄດ້ເຮັດວຽກຢູ່ສະຖານທີ່ຕົວຈິງ ກັບເຈົ້າໜ້າທີ່ປະຈຳດ່ານສາກົນນ້ຳກັ່ນ ແລະ ກອງຮ້ອຍ 221 ເມືອງໜອງແຮດ, ມອບເຄື່ອງຊ່ວຍເຫຼືອໃຫ້ນ້ອງນັກຮຽນທີ່ໂຮງຮຽນປະຖົມພັກແຄະ, ຢ້ຽມຢາມໂຮງງານສາວໄໝມ້ອນ ບ້ານນາຄູນ ເຊິ່ງເປັນໂຄງການຂອງນັກລົງທຶນຈາກ ສປຈີນ, ຢ້ຽມຢາມ ແລະ ເຮັດວຽກຢູ່ບໍລິສັດພັດທະນາພະລັງງານໃໝ່ (ພະລັງງານແສງອາທິດ), ຢ້ຽມຢາມຟາມງົວວີນາມິວ, ຢ້ຽມຢາມໂຮງໝໍມິດຕະພາບລາວ-ຫວຽດ, ເດີນທາງໄປມອບອຸປະກອນການສຶກສາ ແລະ ກິລາ ໃຫ້ໂຮງຮຽນກົນນອນຊົນເຜົ່າ.

**(ກົງທະນູຄຳ ພິພັດເສລີ)**



## ລະດົມຄຳຄິດເຫັນ...

(ຕໍ່ຈາກໜ້າ 10)

ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ (ສພຊ); ເຂົ້າຮ່ວມມີບັນດາທ່ານປະທານ-ຮອງປະທານກຳມາທິການການຕ່າງປະເທດ, ຮອງເລຂາທິການ, ຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ, ປະທານສະພາປະຊາຊົນແຂວງວຽງຈັນ, ຮອງປະທານສະພາປະຊາຊົນນະຄອນຫຼວງວຽງຈັນ ພ້ອມດ້ວຍຄະນະກົມຈາກ ສພຊ, ຄະນະພົວພັນຕ່າງປະເທດສູນກາງພັກ, ກະຊວງການຕ່າງປະເທດ, ບັນດາພະນັກງານອາວຸໂສບຳນານ ແລະ ພະນັກງານທີ່ກ່ຽວຂ້ອງ. ທັງນີ້ກໍເພື່ອຄົ້ນຄວ້າ, ປຶກສາຫາລື, ລະດົມແນວຄວາມຄິດ ແລະ ປະກອບຄຳເຫັນດ້ານເນື້ອໃນໃສ່ປຶ້ມດັ່ງກ່າວ ໃຫ້ມີຄວາມສົມບູນ, ຄົບຖ້ວນ ເພື່ອຈະນຳໄປປຶກສາຫາລືກັບຝ່າຍຫວຽດນາມໃນຂັ້ນສຸດທ້າຍ ໃນທ້າຍເດືອນມິຖຸນານີ້.

ທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ກ່າວວ່າ: ປຶ້ມ “50 ປີແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາແຫ່ງຊາດ ແຫ່ງ ສສ. ຫວຽດນາມ, ການຮ່ວມມືຮອບດ້ານ ແລະ ພັດທະນາ” ຈະໄດ້ສ່ອງແສງໃຫ້ເຫັນເຖິງຜົນສຳເລັດອັນໃຫຍ່ຫຼວງ ໃນການປະຕິບັດພາລະບົດບາດ ແລະ ການເຄື່ອນໄຫວຂອງສອງສະພາແຫ່ງຊາດ ລາວ-ຫວຽດນາມ ໂດຍຕິດພັນກັບການຈັດຕັ້ງປະຕິບັດລັດຖະທຳມະນູນສະບັບທຳອິດ ແລະ ສະບັບປັບປຸງໃນແຕ່ລະໄລຍະ, ແນວທາງປ່ຽນແປງໃໝ່ຂອງພັກ, ການພັດທະນາເສດຖະກິດ-ສັງຄົມໃນສະພາບການຜັນແປທີ່ສັບສົນຂອງພາກພື້ນ ແລະ ສາກົນ; ພ້ອມກັນນັ້ນ, ປຶ້ມປະຫວັດສາດເຫຼັ້ມນີ້ຍັງໄດ້ໃຫ້ຮູ້ເຖິງທິດທາງການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດໃນຕໍ່ໜ້າອີກດ້ວຍ.

ກອງປະຊຸມໄດ້ຮັບຟັງການລາຍງານສະພາບລວມໃນການສ້າງປຶ້ມ “50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາແຫ່ງຊາດແຫ່ງສສ.ຫວຽດນາມ, ການຮ່ວມມືຮອບດ້ານແລະພັດທະນາ” ໃນໄລຍະຜ່ານມາ, ສະເໜີເນື້ອໃນໂດຍຫຍໍ້ໃສ່ແຕ່ລະພາກຂອງປຶ້ມ ແລະ ຮັບຟັງການສະເໜີການອອກແບບໜ້າປົກ, ການປະກອບຮູບພາບໃສ່ຕາມເນື້ອໃນຈິດໃຈຂອງປຶ້ມດັ່ງກ່າວ; ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄວາມເຫັນຕໍ່ເນື້ອໃນຂອງແຕ່ລະພາກທີ່ໄດ້ນຳມາປຶກສາຫາລືຢ່າງພາວະວິໄສ, ຕົວຈິງ ແລະ ເລິກເຊິ່ງ ເຮັດໃຫ້ກອງປະຊຸມບັນລຸຜົນສຳເລັດຕາມຈຸດປະສົງຄາດໝາຍທີ່ວາງໄວ້.

**(ນາງ ກຸກກິກ ບຸດດາໄຊ)**



## ປະກອບຄຳເຫັນ...

(ຕໍ່ຈາກໜ້າ 1)

ແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານປະທານແລະຮອງປະທານກຳມາທິການທີ່ກ່ຽວຂ້ອງຂອງ ສພຊ, ຮອງລັດຖະມົນຕີກະຊວງ ແລະ ອົງການທີ່ກ່ຽວຂ້ອງ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດ, ຫົວໜ້າ-ຮອງຫົວໜ້າກົມ, ຄະນະພະແນກ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ.

ທ່ານພົທ. ສຸວອນເລືອງ ບຸນມີ ກ່າວວ່າ: ກອງປະຊຸມຄັ້ງນີ້ ຈະໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳເຫັນ ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍມີຄວາມຄົບຖ້ວນ, ຮັດກຸມ, ຈະແຈ້ງ, ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ, ຮັບປະກັນຄວາມປອດໄພໄຊເບີ, ແທດເໝາະກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ແລະ ສາມາດຈັດຕັ້ງປະຕິບັດໄດ້.

ທ່ານ ແກ້ວວິສຸກ ໂສລະພົມ ຮອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ (ກຕສ) ໄດ້ສະເໜີໂດຍຫຍໍ້ກ່ຽວກັບເຫດຜົນແລະຄວາມຈຳເປັນຂອງການສ້າງກົດໝາຍວ່າດ້ວຍປອດໄພໄຊເບີ ແມ່ນເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງການພັດທະນາດ້ານເສດຖະກິດ-ສັງຄົມຂອງປະເທດ ເຮັດໃຫ້ການຄຸ້ມຄອງເຕັກໂນໂລຊີ, ຂໍ້ມູນຂ່າວສານແລະການສື່ສານທັນກັບສະພາບການປ່ຽນແປງໃນແຕ່ລະໄລຍະ ແລະ ເພື່ອໃຫ້ສອດຄ່ອງກັບສົນທິສັນຍາສາກົນທີ່ ສປປລາວ ເປັນພາຄີ; ກົດໝາຍສະບັບນີ້ ຍັງມີຄວາມສຳຄັນໃນການສ້າງກົນໄກໃນການຄຸ້ມຄອງ ແລະ ປົກປ້ອງຂໍ້ມູນຂ່າວສານ, ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ໃຊ້ບໍລິການ ໃຫ້ໄດ້ຮັບຄວາມເປັນທຳ ແລະປອດໄພ ພ້ອມທັງສ້າງພື້ນຖານທາງກົດໝາຍໃນການແຕ່ງຕັ້ງ ແລະ ເຄື່ອນໄຫວຂອງລະບົບປະຕິບັດການຄວາມປອດໄພໄຊເບີແຫ່ງຊາດ ແລະ ຍົກປະສິດທິພາບກົນໄກປະສານງານໃນການຕອບໂຕ້ເຫດສຸກເສີນໄຊເບີທີ່ຮ້າຍແຮງ. ນອກຈາກນີ້, ຍັງມີຄວາມຈຳເປັນໃນການກຳນົດມາດຕະການປ້ອງກັນ, ຕອບໂຕ້ເຫດການສຸກເສີນ ແລະ ກູ້ຄືນລະບົບ ໃນກໍລະນີເກີດໄພຄຸກຄາມໄຊເບີ; ສ້າງຂອບເຂດທາງກົດໝາຍສຳລັບການຂຶ້ນທະບຽນຄວາມປອດໄພໄຊເບີແລະການດຳເນີນທຸລະກິດຄວາມປອດໄພໄຊເບີ; ກຳນົດສິດ ແລະ ພັນທະຂອງຜູ້ຂຶ້ນທະບຽນຄວາມປອດໄພໄຊເບີ, ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການດ້ານຄວາມປອດໄພໄຊເບີ ພ້ອມທັງສ້າງກົນໄກໃນການຄຸ້ມຄອງ ແລະກວດກາວຽກງານຄວາມປອດໄພໄຊເບີ; ຈະຊ່ວຍໃຫ້ການຈັດຕັ້ງປະຕິບັດວຽກງານຄວາມປອດໄພໄຊເບີ ມີປະສິດທິພາບ ແລະ ປະສິດທິຜົນ, ປະກອບສ່ວນເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

ທ່ານຮອງລັດຖະມົນຕີກະຊວງກຕສ ໃຫ້ຮູ້ອີກວ່າ: ຫາກກົດໝາຍສະບັບນີ້ຖືກຮັບຮອງ ແລະ ປະກາດໃຊ້ ຈະເປັນເຄື່ອງມືອັນສຳຄັນໃນການຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມໃນຍຸກດິຈິຕອນ; ເປັນກົນໄກສຳຄັນໃນການສົ່ງເສີມການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ໂດຍການສ້າງສະພາບແວດລ້ອມທາງດິຈິຕອນທີ່ປອດໄພ, ໜ້າເຊື່ອຖື ແລະ ເອື້ອອຳນວຍຕໍ່ການຫັນເປັນເສດຖະກິດດິຈິຕອນ; ຊ່ວຍໃຫ້ ສປປລາວ ກ້າວໄປສູ່ການເປັນປະເທດທີ່ມີຄວາມພ້ອມໃນການຮັບມືກັບຄວາມສ່ຽງ ແລະ ໂອກາດໃນໂລກດິຈິຕອນທີ່ກຳລັງເຕີບໃຫຍ່ຂະຫຍາຍຕົວຢ່າງວ່ອງໄວ.

ຜູ້ເຂົ້າຮ່ວມໄດ້ເປັນເຈົ້າການຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນຕໍ່ບັນດາເນື້ອໃນຮ່າງກົດໝາຍສະບັບນີ້ຢ່າງມີຈຸດສຸມ, ມີລັກສະນະຫຼັກການ ແລະ ມີຄຳເຫັນລົງເລິກແຕ່ລະພາກ, ໝວດ, ມາດຕາ ໃນນັ້ນ, ມີຫຼາຍເນື້ອໃນຂອງຫຼາຍມາດຕາ ໄດ້ຮັບການປັບປຸງໃຫ້ມີຄວາມຄົບຖ້ວນ, ຮັດກຸມ ແລະ ຊັດເຈນກວ່າເກົ່າ.

**(ນາງ ກຸກກິກ ບຸດດາໄຊ)**



ສຸຂະພາບ

# ຜັກຕຳນິນເພດຜູ້ ແລະ ເພດແມ່ ເລືອກກິນຜິດອາດເຮັດໃຫ້ຖອກທ້ອງໄດ້

# ຮຽບຮຽງໂດຍ: ດອກໄມ້



ບໍ່ພຽງແຕ່ສິ່ງທີ່ມີຊີວິດທີ່ມີເພດ ຜັກຕຳນິນກໍມີເພດສຳພັນເຊັ່ນດຽວກັນ ເຮົາລອງມາສັງເກດກັນເບິ່ງວ່າແກງທີ່ເຮົາກິນ ຫຼື ເຮັດໃຫ້ລູກກິນນັ້ນ ເປັນຕຳນິນເພດໃດ ມັນແຕກຕ່າງກັນແນວໃດ? ເປັນຫຍັງຈຶ່ງຈຳເປັນຕ້ອງແຍກເພດ? ມື້ນີ້, ເຮົາມີຂໍ້ມູນມາສຶກສານຳກັນ.

ຜັກຕຳນິນອຸດົມໄປດ້ວຍສານອາຫານທີ່ມີປະໂຫຍດຫຼາຍຕໍ່ຮ່າງກາຍເຊັ່ນ: ເບຕ້າແຄໂຣທີນທີ່ຊ່ວຍປ້ອງກັນມະເຮັງແລະພະຍາດຫົວໃຈຂາດເລືອດ ເຊິ່ງປະກອບດ້ວຍທາດແຄວຊຽມທີ່ຊ່ວຍບຳລຸງກະດູກ ແລະ ແຂ້ວ; ພ້ອມນັ້ນ, ຍັງປະກອບດ້ວຍຟອດຟໍລາດ, ທາດເຫຼັກ, ໄນອາຊິນ, ວິຕາມິນ ແລະ ສານອາຫານອື່ນໆທີ່ຈຳເປັນຕໍ່ຮ່າງກາຍ; ນອກນີ້, ມະຫາວິທະຍາໄລມະຮີດົນພົບວ່າ ຜັກຕຳນິນມີເສັ້ນໃຍອາຫານທີ່ຊ່ວຍຫຼຸດຄວາມສ່ຽງຕໍ່ການເປັນມະເຮັງກະເພາະອາຫານ; ສ່ວນສູດຢາບູຮານເວົ້າໄວ້ວ່າ ຜັກຕຳນິນເປັນຢາເຢັນ, ໃບຊ່ວຍຂັບລ້າງພິດຮ້ອນ, ແກ້ອາການໄຂ້, ແກ້ອາການແພ້ອາຫານ, ອັກເສບ, ພິດຈາກແມງໄມ້ກັດ, ແກ້ອາການຄັນ, ແກ້ເຈັບຕາ, ຕາປຽກ, ຕາແດງ, ບັນເທົາພະຍາດຜິວໜັງ ແລະຊ່ວຍຫຼຸດນ້ຳຕານໃນເລືອດ.

ສຳລັບແມ່ລູກອ່ອນ ຜັກຕຳນິນມີປະໂຫຍດຫຼາຍ ເພາະອຸດົມໄປດ້ວຍທາດໂປຣຕີນ, ແຄວຊຽມ, ທາດເຫຼັກ ແລະ ວິຕາມິນຫຼາກຫຼາຍຊະນິດ ທັງມີເສັ້ນໃຍຫຼາຍ ຊ່ວຍບຳລຸງນ້ຳນົມ ແລະ ເພີ່ມປະລິມານນ້ຳນົມ ໃຫ້ພຽງພໍກັບຄວາມຕ້ອງການຂອງເດັກ.

**ໃບຕຳນິນເພດຜູ້:** ໃບຕຳນິນເພດຜູ້ຈະມີຮອຍແສກໃບຫຼາຍ ຄົນສ່ວນຫຼາຍບໍ່ມັກນິຍົມກິນ ເພາະຖ້າທ່ານໃດທີ່ທາດໃນຮ່າງກາຍບໍ່ດີ ເມື່ອກິນໃບ ຫຼື ຍອດຂອງຜັກຕຳນິນເພດຜູ້ອາດເຮັດໃຫ້ເກີດອາການຖອກທ້ອງ ຫຼື ຖ່າຍບໍ່ເຊົາໄດ້ ແຕ່ກໍຍັງມີຂໍ້ດີຄືມີຄຸນສົມບັດເປັນຢາ ຊ່ວຍດັບພິດຮ້ອນ, ແກ້ໄຂ້, ຫຼຸດລະດັບນ້ຳຕານໃນເລືອດ, ດີຕໍ່ຄົນທີ່ເປັນພະຍາດເບົາຫວານ ແລະ ຍັງສາມາດນຳໃບມາຕຳ ແລ້ວພອກບໍລິເວນທີ່ຖືກແມງໄມ້ກັດ ເພື່ອຖອນພິດ ຫຼື ປິ່ນປົວພະຍາດຜິວໜັງໄດ້ ແລະ ດອກຍັງສາມາດຊ່ວຍບັນເທົາອາການຄັນຕາມຜິວໜັງ; ຮາກຍັງໃຊ້ເປັນຢາແກ້ຫວັດ ແລະ ຫຼຸດອາການປວດຮາກໄດ້ນຳອີກ.

**ໃບຕຳນິນເພດແມ່:** ມັກມີຂາຍຢູ່ຕາມຕະຫຼາດທົ່ວໄປ ໃບແມ່ນຂ້ອນຂ້າງມົນ ແຄມຂອງໃບແມ່ນບໍ່ມີແສກຫຼາຍ ສາມາດນຳໃຊ້ເພື່ອປຸງແຕ່ງອາຫານປອດໄພກວ່າໃບເພດຜູ້.

ການປຸງແຕ່ງບໍ່ວ່າຈະເປັນໃບເພດຜູ້ຫຼືແມ່ກໍລ້ວນແຕ່ເປັນຜັກທີ່ມີຄຸນປະໂຫຍດຕໍ່ຮ່າງກາຍ ພຽງແຕ່ຕ້ອງເລືອກໃຊ້ມັນຢ່າງຖືກຕ້ອງ ສິ່ງສຳຄັນທີ່ຈະຕ້ອງສັງເກດຄຸນລັກສະນະໃຫ້ດີກ່ອນທີ່ຈະບໍລິໂພກ ຖ້າບໍ່ດັ່ງນັ້ນປະໂຫຍດທີ່ຄວນຈະເກີດ ກັບກາຍເປັນເປັນໂທດ ທີ່ສິ່ງຜົນກະທົບທາງລົບໄດ້ໂດຍບໍ່ຮູ້ຕົວ.




## ຟານເຂົ້າບ້ານ

# ຄົມສິລປ໌

❊ ເຫດໃຫຍ່ຟານເຂົ້າບ້ານ  ບູຮານວ່າຄະລຳເຂັດ
ເພາະເປັນແນວຂວງຂັດ  ຂະໜາບເມືອງມະລາຍມ້າງ
ເຮືອນຊິເພພັງຮ້າງ  ຜົນພວງໄພອຸບາດ
ອາເພດແຮງເຮັ່ງຮ້າຍ  ສະຫຼາຍຫຼົ້ມຫຼົ້ມບໍ່ຍັງ ວ່າເດ!

❊ ຄັນປັນຍາສ່ອງສ້ຽມ  ສັດຈະພາກວິໄສ
ໄຂຂອດພູມຜະຫຍາເລິກ  ລ່ຽມບັງບົງຊ້ອນ
ຟານນີ້ ອຸປະມາດ້ວຍ  ຄຳເຕືອນເຕີນບອກ
ໄຂໃຫ້ອອກປອກໃຫ້ກ້ຽງ  ຊີມຽງພໍ້ພົບເຫັນ

❊ ຟານກໍດຽວດັ່ງດ້າມ  ທຳມະຊາດອຸດົມສຸກ ນັ້ນແລ້ວ!
ສັດສິ່ງ ຊັບພະຍາກອນທັງ  ປ່າພົງພະນາໄມ້
ຍັງອາໄສປະສົງສ້າງ  ກາງດົງດອນເຂດ
ຄົນບໍ່ໄດ້ເຂັ່ນຂ້າ  ຟານຈິ່ງມາພົບພໍ້  ພະນໍຍ້ຽມຍ່ອງຍາມ ແທ້ໃດ!

❊ ຮຽມນີ້ ຟານບໍ່ຢ້ານ  ຢຳຢ່ອນສັດສາ
ຢ້ານແຕ່"ພານ"ພາລາເລງ  ລ່ຽມລາຍລວງສໍ້
ພານທີ່ ກືນກິນຫຍໍ້າ  ທຳລາຍສັດປ່າ
ທັງພວກພານກິ່ນໄງ້  ພະນາໄມ້ມຸ່ນມົນ

❊ ຢ້ານແຕ່ພານລ່ວງລ້ຳ  ຖະຫລຳເຂດຂຽວສະຫງວນ
ຕັດໄມ້ກາຍເກີນກົດ  ລະບຽບເລັງແລໄວ້
ບູກລຸກດົນດົງເຂົ້າ  ຂະຫຍາຍວົງວາງຈູດ
ຂຶ້ນວ່າພານພວກນີ້  ເປັນທີ່ສົມເພດພ້ຽງ  ກວ່າຟານເຕັ້ນໄຕ່ຍາມ ແທ້ໃດ!



## ສົມທາຍ ລະບາຍ

(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)

# ສຽມທ້ຽນ

❊ **ທ້ອງ**ການສາທາລະນະສຸກເມືອງໄຊຍະບູລີ ອອກແຈ້ງການເຕືອນພໍ່ແມ່ປະຊາຊົນ ໃຫ້ເທັນໄດ້ຄວາມ**ອັນຕະລາຍຂອງການບໍລິໂພກເຫັດ** ເບື້ອງດ້ອຍປີ 2025 ມີລາຍງານການເບື່ອເຫັດທົ່ວແຂວງ **8 ກໍລະນີ** ມີຜູ້**ເສຍຊີວິດ 6 ກໍລະນີ** ອັນຕະລາຍເຮັ່ງຮ້າຍ ພະຍາດໂລຄາ ຍັງອົບອຽບມາ ຈູ່ໂຈມເລັງເລື້ອຍ ຄືດັ່ງເສືອຈອບຖ້າ ລ່າຄ່ກິນເຫຍື່ອ ມັນຊິກຸມກິນເບື້ອ ຫາກເຈົ້າບໍ່ລະວັງ **ນັ້ນແລ້ວ!**

❊ **ຕາມ**ການຄາດຄະເນຂອງກົມອຸຕຸນິຍົມ ແລະ ອຸທົກກະສາດ ໃຫ້ຮູ້ວ່າ: ອາກາດຈະ**ອົບເອົ້າຂຶ້ນຕື່ມ**ໃນສອງສາມວັນຂ້າງໜ້າ ແລະ ອາດຈະມີ**ຝົນລົງມາລະດັບ**ຄ່ອຍຫາປານກາງຢູ່ບາງທ້ອງຖິ່ນ ຊໍໃຫ້ມີສະຕິຕັ້ງ ຕາມຕິດຂ່າວອຸບທະພູມ **ພີ່ນ້ອງເອີຍ!** ເພາະອາດມີຝົນ-ລົມ ພາຍຸໝຸນມາໃກ້ ເພາະບູຮານເຄີຍສອນສັ່ງ ຝົນຊິຕົກຟ້າສະຫວ່າງ ຝົນຊິຫ່າງຟ້າມືດມົ້ວ ສ່ານວນເອົ້າອາດແມ່ນຈິງ **ໄດ໋ເດີ!**

## ຊວນຍິ້ມ

# ແອ່ນຕຸ້ງ

### ເລື່ອງ: ພາບຊ້ອນ

ໝ່ແຂ້ວໄປຫາໝູ່ທີ່ເປັນໝໍຕາ ເພື່ອຊ່ວຍຜ່າຕັດຕາຕໍ້ໃຫ້, ຫຼັງຈາກຜ່າຕັດໄປໄດ້ໜຶ່ງອາທິດ ໝ່ແຂ້ວກໍໂທກັບໄປຫາໝ່ຕາວ່າ:

**ໝ່ແຂ້ວ:** ບັກໝ່ສຽວ ມຶງຜ່າຕັດໃຫ້ກູຈັ່ງໄດ໋ຂອງມຶງເນາະ, ຕອນນີ້ກູເບິ່ງຫຍັງກໍເຫັນເປັນພາບຊ້ອນໄປໝົດ

**ໝ່ຕາ:** ມຶງບໍກະໃຈຮ້ອນເນາະ ກໍໃຫ້ເວລາມັນແດ່ຕີ, ດຽວມັນກະດີຂຶ້ນເອງຫັ້ນແຫຼະ

ອາທິດຕໍ່ມາໝ່ຕາເຈັບແຂ້ວ ເລີຍໄປຫາໝ່ແຂ້ວຊ່ວຍຫຼົກແຂ້ວທີ່ເຈັບອອກໃຫ້, ຜ່ານໄປສອງສາມມື້ກໍບໍ່ເຊົາປວດ ຈຶ່ງໂທໄປຫາໝ່ແຂ້ວວ່າ:

**ໝ່ຕາ:** ສຽວ ມຶງຫຼົກແຂ້ວໃຫ້ກູຈັ່ງໄດ໋ອະ ມັນຄືຍັງເຈັບບໍ່ເຊົາຈັກເທື່ອ

**ໝ່ແຂ້ວ:** ມຶງນີ້ກໍໃຈຮ້ອນໂພດ ໃຫ້ເວລາມັນແດ່ລະຫວາ ບຶດດຽວມັນກະເຊົາ; ແຕ່ຖ້າວ່າໝົດທິດນີ້ມຶງຍັງເຈັບບໍ່ເຊົາ ມຶງກັບມາຫາກູໃໝ່ເດີ, ເພາະຕາກູເຫັນພາບຊ້ອນ ຢ້ານຫຼົງຫຼົກແຂ້ວມຶງຜິດເຫຼັ້ມ !!!!!!

## ຄະຕິເຕືອນໃຈ

# ດອກຫຍ້າ

ຄົນຮູ້ດີ  ບໍ່ມີວັນເຮັດຊົ່ວ
ຄົນຮູ້ຕົວ  ບໍ່ມີວັນເຮັດຜິດ
ຄົນຮູ້ຄິດ  ບໍ່ມີວັນຫຼົງຕົນ
ຄົນຮູ້ຈັກບຸນຄຸນຄົນ  ບໍ່ມີວັນຕົກຕ່ຳ

ລັດຖະສະພາຕ່າງປະເທດ

# UNC ຊະນະການເລືອກຕັ້ງ Trinidad ແລະ Tobago




(Xinhua) - ຄະນະກຳມະການເລືອກຕັ້ງແລະເຂດແດນ (Elections and Boundaries Commission - EBC) ຂອງສາທາລະນະລັດ ຕຣີນິດັດ ແລະ ໂຕບາໂກ ໄດ້ປະກາດໃນວັນອັງຄານທີ 29 ເມສາຜ່ານມາວ່າ ຜົນການເລືອກຕັ້ງຢ່າງເປັນທາງການສະແດງໃຫ້ເຫັນວ່າພັກສະຫະຊາດຄອງເກຣສ (United National Congress-UNC) ຊະນະການເລືອກຕັ້ງສະພາຜູ້ແທນປະຊາຊົນ (ສະພາຕ່ຳ) ໂດຍໄດ້ຮັບ 26 ຈາກທັງໝົດ 41 ທີ່ນັ່ງ, ໃນຂະນະທີ່ຂະບວນການປະຊາຊົນແຫ່ງຊາດ ໄດ້ 13 ທີ່ນັ່ງແລະພັກປະຊາຊົນໂຕບາໂກ ໄດ້ 2 ທີ່ນັ່ງ; EBC ກ່າວເສີມວ່າ ມີຈຳນວນຜູ້ມາໃຊ້ສິດເລືອກຕັ້ງ ປະມານ 54%.

ຈາກຜົນການເລືອກຕັ້ງ, ນາງກະມະລາເປີຊາດ-ບິສເຊສຊາ (Kamla Persad-Bissessar) ຫົວໜ້າ UNC ໄດ້ກາຍເປັນນາຍົກລັດຖະມົນຕີຄົນໃໝ່ ໃນວັນທີ 1 ພຶດສະພາຜ່ານມາ; ເປີຊາດ-ບິສເຊສຊາ ເຊິ່ງເກີດໃນວັນທີ 22 ເມສາ 1952 ເຄີຍເປັນນາຍົກລັດຖະມົນຕີແມ່ຍິງຄົນທຳອິດຂອງປະເທດເມື່ອເດືອນພຶດສະພາ 2010.

# Namibia ຈະສະເໜີຮ່າງກົດໝາຍການຄ້າສາກົນເພື່ອຊຸກຍູ້ການທູດທາງເສດຖະກິດ



(Xinhua) - ສາທາລະນະລັດນາມິບີ ມີແຜນຈະສະເໜີຮ່າງກົດໝາຍການຄຸ້ມຄອງການຄ້າສາກົນສະບັບໃໝ່ແນໃສ່ປັບປຸງຂອບນະໂຍບາຍການຄ້າຂອງປະເທດແລະປົກປ້ອງອຸດສາຫະກຳພາຍໃນ, ເຊລມາອາຊິປາລາ-ມູຊາວິ (Selma Ashipala-Musavyi) ລັດຖະມົນຕີກະຊວງການພົວພັນສາກົນ ແລະ ການຄ້າ ກ່າວ.

ວັນພຸດທີ 30 ເມສາຜ່ານມາ, ນາງ ອາຊິປາລາ-ມູຊາວິ ໄດ້ສະເໜີຮ່າງງົບປະມານຂອງກະຊວງສຳລັບສົກປີ 2025-2026 ຕໍ່ສະມາຊິກສະພາ ໂດຍກ່າວວ່າ ຮ່າງກົດໝາຍສະບັບນີ້ ຈະສະໜອງເຄື່ອງມືທາງກົດໝາຍ ເພື່ອກວດສອບການທຸ້ມຕະຫຼາດ, ກຳນົດອັດຕາພາສີ ແລະ ປົກປ້ອງອຸດສາຫະກຳເກີດໃໝ່.

ນາງເນັ້ນຢ້ຳວ່າ, ນະໂຍບາຍການຕ່າງປະເທດຂອງນາມິບີຍັງສຸມໃສ່ການເຊື່ອມໂຍງເຂົ້າກັບພາກພື້ນແລະການທູດທາງເສດຖະກິດ ໂດຍສະເພາະແມ່ນຜ່ານເຂດການຄ້າເສລີທະວີບອາຟຼິກາ ແລະ ຂອບການຄ້າປະຊາຄົມການພັດທະນາອາຟຼິກາໃຕ້ ທັງກ່າວວ່າປະເທດທາງພາກໃຕ້ຂອງອາຟຣິກາແຫ່ງນີ້ ມີຈຸດປະສົງເພື່ອກະຈາຍຄູ່ຮ່ວມການຄ້າ, ຂະຫຍາຍຕະຫຼາດສົ່ງອອກ ແລະ ດຶງດູດການລົງທຶນໃນບັນດາຂະແໜງການທີ່ສຳຄັນເຊັ່ນ: ກະສິກຳ, ພະລັງງານ, ການຂົນສົ່ງ (ໂລຈິສຕິກ) ແລະ ການທ່ອງທ່ຽວ.

ເມື່ອເບິ່ງໄປທາງໜ້າ, ກະຊວງການພົວພັນສາກົນ ແລະ ການຄ້າ ມີເປົ້າໝາຍທີ່ຈະເສີມຂະຫຍາຍຄວາມສາມາດຂອງສະຖາບັນ, ຍົກລະດັບການທູດດີຈິຕອນ ແລະ ເພີ່ມທະວີການປະສານງານກັບພາກສ່ວນກ່ຽວຂ້ອງໃນພາກເອກະຊົນ.

ອາຊິປາລາ-ມູຊາວິ ກ່າວວ່າ, ກະຊວງຈະເຮັດວຽກເພື່ອຮັບປະກັນວ່າການຮ່ວມມືສາກົນຈະໄດ້ຮັບຜົນປະໂຫຍດທາງເສດຖະກິດ ແລະ ສັງຄົມທີ່ເປັນຮູບປະທຳສຳລັບຊາວນາມິບີທັງໝົດ. ນາງກ່າວວ່າ "ພວກເຮົາຕ້ອງວາງແນວທາງການທູດທາງການເມືອງ ແລະ ເສດຖະກິດໃຫ້ສອດຄ່ອງ ເພື່ອສ້າງຜົນກະທົບທີ່ສູງສຸດຕໍ່ປະເທດຊາດ.

# ໂປໂລຍ ສະເຫຼີມສະຫຼອງວັນລັດຖະທຳມະນູນສະບັບປະຫວັດສາດ ຄົບຮອບ 234 ປີ



(Xinhua) - ວັນເສົາທີ 3 ພຶດສະພາຜ່ານມາ, ໂປໂລຍ ໄດ້ຈັດພິທີສະເຫຼີມສະຫຼອງວັນລັດຖະທຳມະນູນຢ່າງເປັນທາງການ ຢູ່ນະຄອນຫຼວງວາກໂຊວີ ເຊິ່ງເປັນວັນຄົບຮອບ 234 ປີ ແຫ່ງການຮັບຮອງເອົາລັດຖະທຳມະນູນ 3 ພຶດສະພາ, ລັດຖະທຳມະນູນສະບັບທຳອິດຂອງເອີຣົບສະໄໝໃໝ່.

ພິທີດັ່ງກ່າວ ຈັດຂຶ້ນຢູ່ Castle Square ໂດຍປະທານາທິບໍດີອັນເດຣຈ ດູດາ (Andrzej Duda) ກ່າວຄຳປາໄສທີ່ສຳຄັນຮ່ວມກັບນາຍົກລັດຖະມົນຕີ ໂດນັລ ທັສກ໌ (Donald Tusk) ແລະເຈົ້າໜ້າທີ່ລະດັບສູງຄົນອື່ນໆ.

ລັດຖະທຳມະນູນ 3 ພຶດສະພາ 1791 ເຊິ່ງໄດ້ຮັບການຮັບຮອງໂດຍເຄືອຈັກກະພົບ ໂປໂລຍ-ລິດຕົວນີ, ຍັງເປັນສັນຍະລັກທີ່ສຳຄັນຂອງເອກະລັກປະຈຳຊາດ, ເຖິງວ່າຈະມີການຈັດຕັ້ງປະຕິບັດໃນໄລຍະສັ້ນ.

ວັນນີ້ແມ່ນສ່ວນໜຶ່ງຂອງວັນພັກຍາວ "Majowka" ຂອງໂປໂລຍ ລວມທັງວັນແຮງງານ ແລະວັນທຸງຊາດ ເຊິ່ງມີການປະດັບປະດາທຸງສີແດງແລະສີຂາວຢູ່ຕາມຖະໜົນຫົນທາງ ແລະ ບ້ານເຮືອນໃນທົ່ວປະເທດ.

# Friedrich Merz ສາບານຕົນຮັບຕຳແໜ່ງນາຍົກລັດຖະມົນຕີຄົນໃໝ່ຂອງເຢຍລະມັນ



(Xinhua) - ຟຣີດຣິຊ ເມີຊ ຫົວໜ້າພັກສະຫະພາບປະຊາທິປະໄຕຄຣິສຕຽນ (CDU) ຝ່າຍອະນຸລັກນິຍົມ ໄດ້ສາບານຕົນຂຶ້ນດຳລົງຕຳແໜ່ງນາຍົກລັດຖະມົນຕີ ເມື່ອວັນອັງຄານທີ 6 ພຶດສະພາຜ່ານມາ ໃນລະຫວ່າງກອງປະຊຸມບຸນເດສທາກ (Bundestag) ເຊິ່ງເປັນສະພາຕ່ຳຂອງລັດຖະສະພາປະເທດເຢຍລະມັນ, ເມີຊ ໄດ້ຮັບຄະແນນ 325 ຕໍ່ 289 ສຽງ ເຊິ່ງເກີນເກນ 316 ສຽງທີ່ກຳນົດໄວ້ (Bundestag ມີ 630 ທີ່ນັ່ງ); ໃນການລົງຄະແນນສຽງຮອບທຳອິດ, ເຂົາໄດ້ຮັບ 310 ສຽງ, ເຮັດໃຫ້ເຂົາກາຍເປັນຜູ້ສະໝັກຊິງຕຳແໜ່ງນາຍົກລັດຖະມົນຕີຄົນທຳອິດ ນັບແຕ່ສົງຄາມໂລກຄັ້ງທີ II ທີ່ບໍ່ໄດ້ຮັບການເລືອກຕັ້ງໃນຮອບທຳອິດ.

ພາຍຫຼັງການລົງຄະແນນສຽງຮອບທຳອິດບໍ່ໄດ້ຮັບຜົນສຳເລັດ, ນາງ ຈູເລຍ ໂຄລເອັກເນີ (Julia Kloeckner) ປະທານສະພາຕ່ຳ ໄດ້ສັ່ງໂຈະກອງປະຊຸມຊົ່ວຄາວ; ຈາກນັ້ນ, ບັນດາພັກການເມືອງໃນລັດຖະສະພາ ໄດ້ດຳເນີນການເຈລະຈາຫຼາຍຊົ່ວໂມງ ກ່ອນເຂົ້າສູ່ການລົງຄະແນນສຽງຮອບທີສອງ.

ຫຼັງຈາກຜົນການເລືອກຕັ້ງຂັ້ນສຸດທ້າຍ, ເມີຊ ໄດ້ຖືກແຕ່ງຕັ້ງຢ່າງເປັນທາງການໂດຍປະທານາທິບໍດີ ຟຣັງ-ວາລເຕີ ຊະໄຕໄມເອີ (Frank-Walter Steinmeier) ໃນພິທີທີ່ພະລາຊະວັງເບລລ໌ວິວ (Schloss Bellevue) ເຊິ່ງເປັນທີ່ພັກອາໄສຢ່າງເປັນທາງການຂອງປະທານາທິບໍດີແຫ່ງສະຫະພັນ; ເມີຊ ຈະດຳລົງຕຳແໜ່ງນາຍົກລັດຖະມົນຕີຂອງລັດຖະບານກາງ ໂດຍຈະດຳລົງຕຳແໜ່ງຫົວໜ້າລັດຖະບານປະສົມຊຸດໃໝ່ ທີ່ຈັດຕັ້ງຂຶ້ນໂດຍກຸ່ມສະຫະພາບ CDU/CSU ແລະ ພັກສັງຄົມປະຊາທິປະໄຕ (SPD).

ເມື່ອວັນຈັນທີ 6 ພຶດສະພາ, ຜູ້ນຳຂອງ CDU/CSU ແລະ SPD ໄດ້ລົງນາມໃນຂໍ້ຕົກລົງຮ່ວມລັດຖະບານ; ພາຍໃຕ້ຂໍ້ຕົກລົງທີ່ສຳເລັດໃນເດືອນເມສາຜ່ານມາ ຫຼັງຈາກການເຈລະຈາຫຼາຍອາທິດ, ພັກຕ່າງໆໄດ້ໃຫ້ຄຳໝັ້ນສັນຍາຈະເພີ່ມຂີດຄວາມສາມາດໃນການແຂ່ງຂັນທາງເສດຖະກິດຂອງເຢຍລະມັນ, ເພີ່ມທະວີຄວາມເຂັ້ມແຂງດ້ານການປ້ອງກັນປະເທດ, ຮັດແໜ້ນນະໂຍບາຍຄົນເຂົ້າເມືອງ.

# ພັກເສລີນິຍົມຂອງການາດາ ພວມຢູ່ບົນເສັ້ນທາງການເປັນລັດຖະບານສຽງສ່ວນໜ້ອຍ




(Xinhua) - ພັກເສລີນິຍົມຂອງ ມາກ ຄານີ (Mark Carney) ນາຍົກລັດຖະມົນຕີການາດາ ຄາດວ່າຈະຈັດຕັ້ງລັດຖະບານສຽງສ່ວນໜ້ອຍ ໂດຍສາມາດຍາດໄດ້ທີ່ນັ່ງພຽງພໍທີ່ຈະເປັນຜູ້ນຳປະເທດ, ແຕ່ບໍ່ເຖິງສຽງສ່ວນຫຼາຍ; ອີງຕາມຜົນການເລືອກຕັ້ງຫຼັງຈາກມີການນັບຄະແນນໃໝ່ອີກຄັ້ງ ທີ່ເຜີຍແຜ່ໂດຍການເລືອກຕັ້ງການາດາ (Elections Canada - EC) ເມື່ອວັນເສົາທີ 10 ພຶດສະພາຜ່ານມາ.

ພັກເສລີນິຍົມ ໄດ້ 170 ຈາກທັງໝົດ 343 ທີ່ນັ່ງໃນສະພາສາມັນຫຼືສະພາຕ່ຳແລະຕ້ອງການອີກສອງທີ່ນັ່ງ ເພື່ອຈັດຕັ້ງລັດຖະບານສຽງສ່ວນຫຼາຍ, ພັກອະນຸລັກນິຍົມຂອງ ປີແອຣ໌ ປົວລິແວຣ໌ (Pierre Poilievre) ຈະຍັງຄົງຢູ່ໃນຝ່າຍຄ້ານ ໂດຍມີ 143 ທີ່ນັ່ງ.

ກົດໝາຍການເລືອກຕັ້ງຂອງການາດາ ກຳນົດໃຫ້ມີການນັບຄະແນນໃໝ່ໂດຍສານ ພາຍໃຕ້ການຄວບຄຸມຂອງຜູ້ພິພາກສາສານຊັ້ນສູງ ໃນເຂດເລືອກຕັ້ງໃດກໍຕາມທີ່ມີຄະແນນສຽງແຕກຕ່າງກັນລະຫວ່າງຜູ້ສະໝັກຮັບເລືອກຕັ້ງສອງອັນດັບທຳອິດ ໜ້ອຍກວ່າໜຶ່ງໃນພັນຫຼື 0.1% ຂອງຄະແນນສຽງທັງໝົດໃນເຂດເລືອກຕັ້ງ.

ຕາມການລາຍງານຂອງ EC, ຂະນະນີ້ ກຳລັງມີການນັບຄະແນນໃໝ່ໃນ 3 ເຂດເລືອກຕັ້ງ.

EC ຄາດວ່າຈຳນວນຜູ້ມາໃຊ້ສິດໃນການເລືອກຕັ້ງຄັ້ງນີ້ ຈະຫຼາຍກວ່າ 68.66% ຂອງຈຳນວນປະຊາກອນຜູ້ມີສິດເລືອກຕັ້ງທັງໝົດ, ໂດຍມີຜູ້ມາໃຊ້ສິດ 19.6 ລ້ານຄົນ.

ເຫັນໄວ້ ໄດ້ບົດຮຽນ

# ນະວັດຕະກຳສຸດອື້ອ... ເພື່ອຜົນປະໂຫຍດຂອງມວນມະນຸດ

❖ ວິເສດ ສະແຫວງສຶກສາ

ພາຍໃຕ້ຫົວຂໍ້ບົດນີ້, ທ່ານຜູ້ອ່ານຈະໄດ້ຮູ້ຈັກກັບນະວັດຕະກຳໃໝ່ອ່ຽມທີ່ພວມຢູ່ໃນໄລຍະຄົ້ນຄວ້າ ເຊິ່ງຖ້າສຳເລັດຕາມລະດັບຄາດໝາຍແລ້ວ ກໍຈະຊ່ວຍຫຼຸດຜ່ອນບັນຫາໄຟໃໝ້ປ່າ ເຊິ່ງເກີດຈາກປາກົດການທາງທຳມະຊາດ ເຊັ່ນຟ້າຜ່າ. ໃນປັດຈຸບັນ, ບັນຫາໄຟໃໝ້ຍ້ອນຟ້າຜ່າເກີດຂຶ້ນອ່າວຖີ່ ແຕ່ຍາກທີ່ຈະຄວບຄຸມໄດ້ ເພາະມັນເກີດຈາກການບັນຊາຂອງທຳມະຊາດ ນີ້ຄືຄວາມເຊື່ອໂດຍທົ່ວໄປ, ແຕ່ຖ້າເຈາະເລິກເຂົ້າໄປໃຫ້ເຖິງແກນແທ້ ກໍຈະພົບວ່າການທີ່ມີປາກົດການຟ້າຜ່າເກີດຂຶ້ນອ່າວຖີ່ນັ້ນ ສ່ວນໃຫຍ່ແມ່ນມາຈາກສະພາບປ່ຽນແປງຂອງດິນຟ້າອາກາດ ແລະ ການປ່ຽນແປງດັ່ງກ່າວພູດໃຫຍ່ໆ ກໍແມ່ນມາຈາກນ້ຳມືຂອງມະນຸດທີ່ທຳລາຍສິ່ງແວດລ້ອມດ້ວຍການປ່ອຍກາກບອນ ເຮັດໃຫ້ເກີດປາກົດການເຮືອນແກ້ວ; ນອກຈາກນັ້ນ, ກໍຍັງມີໄພພິບັດທີ່ເກີດຈາກມົນລະພິດທາງອາກາດ. ມາບັດນີ້ ໄດ້ມີຂ່າວອອກມາຈາກປະເທດອິດສະຣາແອນ ວ່າ: ເຫຼົ່ານັກຄົ້ນຄວ້າປະຈຳມະຫາວິທະຍາໄລ ບາລານ Bar LLan ໄດ້ພັດທະນາປັນຍາປະດິດທີ່ສາມາດພະຍາກອນລ່ວງໜ້າກ່ຽວກັບປາກົດການຟ້າຜ່າ ທີ່ອາດຈະເກີດຂຶ້ນໃນເຂດຕ່າງໆ; ປະເທດອິດສະຣາແອນ ມີຄວາມແມ່ນຍຳສູງກວ່າ 90% ວ່າກັນວ່າຜົນສຳເລັດໃນການພັດທະນາປັນຍາປະດິດ ຫຼື (AI) ນີ້ ຈະກາຍເປັນເຄື່ອງມືທີ່ມີປະສິດທິພາບໃນການຊ່ວຍລະບົບບໍລິການດ້ານອຸຕຸນິຍົມ, ການໃຫ້ບໍລິການມອດໄຟ (ດັບເພີງ) ກໍຄືການຕອບໂຕ້ໄພພິບັດທາງທຳມະຊາດໄດ້ຢ່າງທ່ວງທັນ. ຂ່າວບອກວ່າຕົ້ນກຳເນີດຂອງໄຟໃໝ້ປ່ານັ້ນ ສ່ວນໃຫຍ່ເກີດຈາກນ້ຳມືຂອງມະນຸດ ແຕ່ມີຄວາມອັນຕະລາຍໜ້ອຍກວ່າໄຟໄໝ້ປ່າຍ້ອນຟ້າຜ່າ; ເຫດຜົນກໍຄືວ່າ ໄຟໄໝ້ປ່າຍ້ອນຟ້າຜ່ານັ້ນ ຄາດຄະເນບໍ່ໄດ້, ມີຄວາມຮ້າຍແຮງກວ່າເພາະມັກຈະເກີດຂຶ້ນຢູ່ເຂດຫ່າງໄກສອກຫຼີກ ບ່ອນທີ່ມີອຸປະກອນມອດໄຟຈຳກັດ, ໄຟຈາກຟ້າຜ່າ ມັກຈະໜັກຕົວຢູ່ພື້ນດິນເປັນເວລາຫຼາຍວັນກ່ອນຈະລະເບີດອອກມາເທິງໜ້າດິນ ແລ້ວລຸກລາມໄປໃນວົງກວ້າງເມື່ອບວກກັບສະພາບອາກາດທີ່ຮ້ອນ ແລະ ແຫ້ງແລ້ງ. ຜົນສຳເລັດຂອງນັກວິທະຍາສາດອິດສະຣາແອນ ໃນການນຳໃຊ້ເຄື່ອງມື AI ເພື່ອພະຍາກອນບັນຫາຟ້າຜ່າ ເຊິ່ງປະກາດອອກມາວັນທີ 1 ເມສາປີນີ້ ແມ່ນການຕໍ່ຍອດຄວາມພະຍາຍາມໃນການຄົ້ນຄວ້າທີ່ມີເວລາ 7 ປີ; ການຄົ້ນຄວ້າເນັ້ນປັດໄຈທີ່ພາໃຫ້ເກີດຟ້າຜ່າ ໂດຍໄດ້ສຶກສາຄວາມໜາແໜ້ນຂອງພືດພັນ, ຮູບແບບຂອງດິນຟ້າອາກາດ ແລະ ພູມສັນຖານຂອງປະເທດ ບ່ອນທີ່ມັກມີບັນຫາຟ້າຜ່າ.ການຄົ້ນຄວ້າຍັງໄດ້ຈຳແນກໃຫ້ເຫັນຄວາມແຕກຕ່າງລະຫວ່າງໄຟໄໝ້ປ່າແບບທຳມະດາ (ຈາກນ້ຳມືຂອງມະນຸດ) ແລະ ໄຟໄໝ້ປ່າຈາກຟ້າຜ່າ ທັງນີ້, ກໍເພື່ອສາມາດນຳໃຊ້ວິທີການສະເພາະເພື່ອແກ້ໄຂ. ບົດຄວາມໄດ້ສະຫຼຸບເປັນບົດຮຽນວ່າ ການປ່ຽນແປງຂອງດິນຟ້າອາກາດ ໄດ້ເພີ່ມຈັງຫວະຄວາມສ່ຽງທີ່ເຮັດໃຫ້ເກີດມີໄຟໄໝປ່າຍ້ອນຟ້າຜ່າຖີ່ ແລະ ເພີ່ມຂຶ້ນ; ຜົນການຄົ້ນຄວ້າກ່ຽວກັບບັນຫາໄຟໄໝ້ປ່າຍ້ອນຟ້າຜ່ານີ້ ຈະມີບົດບາດສຳຄັນໃນການພະຍາກອນກ່ຽວກັບຄວາມສ່ຽງທີ່ຈະເກີດມີປາກົດການຟ້າຜ່າ, ເມື່ອຮູ້ລ່ວງໜ້າຄືແນວນີ້ ກໍຈະເຮັດໃຫ້ການກະກຽມຄວາມພ້ອມເພື່ອຮັບມືໄດ້ດີຂຶ້ນ.

ນະວັດຕະກຳລ້ຳຍຸກທີ່ຂໍເລົ່າປິດທ້າຍບົດນີ້ກໍຄືການປະດິດສ້າງກ້ອງຈຸລະທັດເອເລັກຕູອນ ທີ່ສາມາດບັນທຶກພາບຄວາມລະອຽດສູງຂອງອະນຸພາກນ້ອຍໆ ຂະໜາດ 10 ໄມໂຄຼແມັດ (Micrometer) ເຊິ່ງມີຂະໜາດ 1 ສ່ວນ 5 (1/5) ຂອງເສັ້ນຜົມມະນຸດ, ເວົ້າໃຫ້ເຂົ້າໃຈງ່າຍໆກໍຄືຖ້າຜ່າເສັ້ນຜົມຄົນເຮົາອອກເປັນ 5 ສ່ຽງ ແນ່ນອນຈະເບິ່ງດ້ວຍຕາເປົ່າບໍ່ເຫັນ ແຕ່ກ້ອງຈຸລະທັດເອເລັກຕູອນນີ້ ສາມາດບັນທຶກພາບໄດ້; ກ້ອງວິເສດວິໄສດັ່ງກ່າວແມ່ນຜົນງານຂອງເຫຼົ່ານັກວິທະຍາສາດປະເທດນູແວນເຊລັງ ປະດິດຄິດຄົ້ນອອກມາ ແລະ ກາຍເປັນຂ່າວດັງໃນຕົ້ນເດືອນເມສາປີນີ້. ຈຸດປະສົງຂອງການປະດິດສ້າງກ້ອງຈຸລະທັດຕາທິບນີ້ອອກມາ ແມ່ນເພື່ອນຳໃຊ້ຄົ້ນຫາແຮ່ທາດປະເສີດທີ່ປະປົນຕາມຫາດຊາຍຣິມຝັ່ງທະເລອັນຍາວຢຽດ ໂດຍສະເພາະແມ່ນເຂດທີ່ມີການຂຸດຄົ້ນແຮ່ຄຳ, ເປັນອັນວ່າກ້ອງນີ້ຈະຊ່ວຍໃຫ້ສາມາດເກັບເລັມເອົາແຮ່ຄຳທີ່ຄົນເຮົາບໍ່ຫົວຊາຍ້ອນແນມບໍ່ເຫັນນັ້ນແລ.

ທະນາຄານພັດທະນາລາວ
LDB Bank




## ເລື່ອງພາສີ

*#ບ່າວກະບື*

**ຄົນ**ໂຮນລັງອະທິບາຍໃຫ້ນັກທ່ອງທ່ຽວອາເມລິກາຟັງ ກ່ຽວກັບສີແດງ, ສີຂາວ ແລະ ສີຄາມ ໃນທຸງຊາດຂອງປະເທດເຂົາ. ເຂົາເວົ້າວ່າ: "ມັນເປັນສັນຍະລັກຂອງການເສຍພາສີ, ໜ້າພວກເຮົາແດງເມື່ອເວົ້າເຖິງພາສີ ຕໍ່ຈາກນັ້ນກໍຈະຂາວຈົນຊາວເມື່ອພວກເຮົາຮູ້ຈຳນວນທີ່ຈະຕ້ອງເສຍ ແລະ ເມື່ອເຖິງເວລາໄປເສຍພາສີຕົວຈິງ, ໃບໜ້າພວກເຮົາກໍຈະປ່ຽນເປັນສີຄາມ."

ນັກທ່ອງທ່ຽວຊາວອາເມລິກາເວົ້າຕອບຄືນໄປວ່າ: "ຢູ່ສະຫະລັດອາເມລິກາ ກໍເປັນຄືດຽວກັນລະ... ຕ່າງແຕ່ວ່າຢູ່ທີ່ນັ້ນ ພວກເຮົາຍັງແນມເຫັນໝູ່ດາວແຕກຢ່າວໆຕື່ມອີກ."

## Tax Matters

*# BAOKBU*

A Dutchman was explaining the red, white and blue colors of his country's flag to an American tourist. "It's symbolic of our taxes," he said. "We turn red when we talk about them, white when we figure them out and blue when we pay them."

The tourist answered, "It's the same in America - only we see stars too!"

ຕາມພາສາ ກາຕູນ



ຄວັນອອກດັງປອດພັງ ທຳລາຍຄົນອ້ອມຂ້າງ

● ໂດຍ : ພູຜາ

## ຫົວໜ້າ...

(ຕໍ່ຈາກໜ້າ 5)

ນິຕິບັນຍັດ ຮ່ວມກັນຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືລະຫວ່າງສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດເບລາຣຸດຊີ,ສະແດງອອກມີການແລກປ່ຽນຄະນະຜູ້ແທນນຳກັນຢ່າງປົກກະຕິ. ອັນທີ່ພົ້ນເດັ່ນແມ່ນໃນເດືອນຕຸລາ 2024 ຜ່ານມາ, ທ່ານ ອີກໍ ເຊີເກນໂກ (Igor Sergeenko) ປະທານສະພາຜູ້ແທນປະຊາຊົນຂອງສະພາແຫ່ງຊາດເບລາຣຸດຊີ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງ ກໍໄດ້ມາຢ້ຽມຢາມ ສປປລາວ ຢ່າງເປັນທາງການແລະເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ທີ່ເປັນເຈົ້າພາບຈັດຂຶ້ນໂດຍສະພາແຫ່ງຊາດລາວ; ມີການແລກປ່ຽນຂໍ້ມູນຂ່າວສານກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດດ້ານນິຕິບັນຍັດນຳກັນ, ແລກປ່ຽນສານຊົມເຊີຍ ແລະ ສານອວຍພອນໃນໂອກາດວັນສຳຄັນຕ່າງໆຂອງສອງຊາດ; ຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນແລະສາກົນ ເປັນຕົ້ນແມ່ນສະຫະພັນລັດຖະສະພາສາກົນ (IPU), ເວທີປຶກສາຫາລືລັດຖະສະພາອາຊີ-ເອີຣົບ (ASEP), AIPA ແລະ ເວທີອື່ນໆ. ພ້ອມກັນນີ້, ສອງຝ່າຍຍັງປຶກສາຫາລືທິດທາງແຜນການຮ່ວມມືໃນຕໍ່ໜ້າ ເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈຂອງບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືນຳກັນໂດຍສະເພາະແມ່ນການຮ່ວມມືລະຫວ່າງຄະນະເລຂາທິການຂອງສອງສະພາແຫ່ງຊາດ ເພື່ອສ້າງເງື່ອນໄຂໃຫ້ມີການແລກປ່ຽນຄະນະຜູ້ແທນ ທີ່ຕິດພັນກັບການແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານ, ສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫຼືອໃນການເຄື່ອນໄຫວວຽກງານຢູ່ເວທີລັດຖະສະພາພາກພື້ນ ແລະ ສາກົນ.

ນອກຈາກນີ້, ຄະນະຜູ້ແທນລາວຍັງໄດ້ໄປຢ້ຽມຊົມຫໍພິພິທະພັນສຸສານຂອງບັນດານັກຮົບທີ່ອຸທິດ ແລະ ເສຍສະຫຼະຊີວິດ ເພື່ອຕໍ່ສູ້ຍາດເອົາໄຊຊະນະໃນມະຫາສົງຄາມປົກປ້ອງປິຕຸພູມຂອງຕົນ, ຫໍສະພາແຫ່ງຊາດ, ມະຫາວິທະຍາໄລ ແລະ ພື້ນຖານທາງດ້ານວັດທະນະທຳຈຳນວນໜຶ່ງ ຢູ່ນະຄອນຫຼວງມິນສກ໌ອີກດ້ວຍ.

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລີນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລີນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ